# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01 - 07 ພະຈິກ 2023

ປີທີ 12

ສະບັບທີ 944

ລາຍສັປະດາ


# ກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ໄຂຂຶ້ນຢ່າງເປັນທາງການ



(ສພຊ) ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 31 ຕຸລາ 2023 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ; ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ; ບັນດາທ່ານຜູ້ນຳຂັ້ນສູງ, ອະດີດຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງບົດສູນທອນພົດ ເປີດກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ





ການເບິ່ງຕົນເອງຄືເບິ່ງອັນຖາວອນ... (ໜ້າ 9)



ກຳປູເຈຍ ໄດ້ຮັບລາງວັນ... (ໜ້າ 11)




ບົດຮຽນການແກ້ໄຂບັນຫາສາສະໜາ... (ໜ້າ 12)


## ປະທານສະພາແຫ່ງຊາດ ກ່າວສູນທອນພົດ ໄຂກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX



ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຫາກໍອັດລົງດ້ວຍຜົນສຳເລັດອັນຈົບງາມ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX ກໍຄືການດຳເນີນ 2 ວາລະແຫ່ງຊາດ ພວມດຳເນີນໄປດ້ວຍບາດກ້າວຂະຫຍາຍຕົວຢ່າງຕັ້ງໜ້າ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຕ້ອນຮັບທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມທີ່ມີຄວາມສຳຄັນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍ ຢ່າງສຸດອົກ ສຸດໃຈ (ຂໍຊົມເຊີຍ).

ຂໍສະແດງຄວາມຂໍ່ານັບຊົມເຊີຍ ແລະ ຍິນດີຕ້ອນຮັບບັນດາທ່ານຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານອະດີດຜູ້ນຳຂັ້ນສູງ

ອ່ານຕໍ່ໜ້າ 2

## ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

(ສພຊ) ວັນທີ 31 ຕຸລາ 2023 ທີ່ຫ້ອງປະຊຸມສະພາແຫ່ງຊາດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລາຍງານໂດຍສັງເຂບຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບສະພາບການທີ່ພົ້ນເດັ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມກາງສະໄໝ 5 ປີ ຄັ້ງທີ IX (2021-2025) ແລະ ແຜນສືບຕໍ່ປະຕິບັດວຽກງານໃນທ້າຍສະໄໝຮອດປີ 2025; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະ



ຈຳປີ 2023 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ວ່າ:

ພາກທີ I. ສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນກາງສະໄໝ 5 ປີ (2021-2025) ແລະ ການເຄື່ອນໄຫວວຽກງານ ປະຈຳປີ 2023.

1. ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:

- ໄດ້ເອົາໃຈໃສ່ຊີ້ນຳການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຕາມແຜນງານ ແລະ ໂຄງການຂອງກຳລັງດັ່ງກ່າວຢ່າງເປັນປົກກະຕິໂດຍພື້ນຖານ ໂດຍສະເພາະ ການປະຕິບັດ 4 ໜ້າທີ່ໃຫຍ່ 36 ແຜນງານຂອງກະຊວງປ້ອງກັນປະເທດ ແລະ 4 ແຜນງານ 41 ໂຄງການຂອງກະຊວງປ້ອງກັນຄວາມສະຫງົບ; ການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບ

ອ່ານຕໍ່ໜ້າ 3

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ

(ສພຊ) ວັນທີ 31 ຕຸລາ 2023 ທ່ານ ສົມມາດ ພົລເສນາ ຮອງປະທານຄະນະປະຈຳສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ມີຄຳເຫັນຕໍ່ບົດລາຍງານ ໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ແລະ ບົດລາຍງານຂອງບັນດາທ່ານລັດຖະມົນຕີ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການສະ



ຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການປະຈຳປີ 2024 ດັ່ງນີ້:

I. ຕໍ່ກັບພາກສະຫຼຸບຜົນ

ອ່ານຕໍ່ໜ້າ 4

## ການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ



(ສພຊ) ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 31 ຕຸລາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນເງິນຕາປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ດັ່ງລຸ່ມນີ້:

ພາກທີ I: ການຈັດຕັ້ງປະຕິບັດແຜນເງິນຕາກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-

ອ່ານຕໍ່ໜ້າ 3

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)



ຈາກທ່ານ ປະທານສະພາແຫ່ງຊາດ, ຈາກນັ້ນ ກອງປະຊຸມໄດ້ຮັບຟັງບົດລາຍງານໂດຍສັງເຂບຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ກ່ຽວກັບສະພາບການເຄື່ອນໄຫວວຽກງານພົ້ນເດັ່ນກາງສະໄໝ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ທິດທາງແຜນການປະຈໍາປີ 2024; ຈາກນັ້ນ ກອງປະຊຸມ ກໍໄດ້ຮັບຟັງບົດລາຍງານ ກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ກາງສະໄໝ (2021-2023) ແລະ ແຜນສືບຕໍ່ທ້າຍສະໄໝ ຮອດປີ 2025 ຈາກທ່ານ ຄໍາເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ຮັບຟັງລາຍງານ ກ່ຽວກັບສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2023 ແລະ ແຜນງົບປະມານແຫ່ງລັດ ປີ 2024 ຈາກທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ; ຮັບຟັງລາຍງານການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນເງິນຕາ ປະຈໍາປີ 2023 ແລະ ທິດທາງແຜນການປະຈໍາປີ 2024 ຈາກທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປລາວ. ຈາກນັ້ນ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ໄດ້ປະກອບຄໍາເຫັນຕໍ່ບົດລາຍງານຂອງລັດຖະບານ.

ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈະດໍາເນີນໄປຈົນຮອດວັນທີ 21 ພະຈິກ 2023 ຈິ່ງຈະສໍາເລັດ. ທ່ານສາມາດສົ່ງຄໍາຄິດຄໍາເຫັນ ກ່ຽວກັບການດໍາເນີນກອງປະຊຸມ ຜ່ານໂທລະສັບສາຍດ່ວນ 156 (ໂດຍບໍ່ເສຍຄ່າ); ອີເມວ: nalao.156@gmail.com; App: Lao Na.

## ປະທານສະພາ...

(ຕໍ່ຈາກໜ້າ 1)

ຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈໍາລາວ ແລະ ບັນດາຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ (ຂໍຊົມເຊີຍ).

ຂໍສະແດງຄວາມຊົມເຊີຍ ມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງພ້ອມພຽງ (ຂໍຊົມເຊີຍ).

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ!

ການເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະ ກົດໝາຍ ມາຮອດປັດຈຸບັນ ແມ່ນໄດ້ກ້າວເຂົ້າສູ່ກາງສະໄໝຂອງອາຍຸການສະພາແຫ່ງຊາດ ຊຸດທີ IX ໃນທ່າມກາງສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫຼັບຊັບຊ້ອນ ທີ່ຄາດຄະເນໄດ້ຍາກ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ບັນດາປະເທດໃນໂລກ ລວມທັງ ສປປ ລາວ ຂອງພວກເຮົາ, ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດເຮົາ ເຊິ່ງສົ່ງຜົນກະທົບ ຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ ແລະ ປະຊາຊົນໃນຂອບເຂດທົ່ວປະເທດ. ແຕ່ດ້ວຍຄວາມເອົາໃຈໃສ່ນໍາພາ-ຊີ້ນໍາ ຂອງຄະນະບໍລິຫານງານສູນກາງພັກ, ການເຮັດວຽກຮ່ວມກັນຢ່າງໃກ້ຊິດ ແລະ ເປັນເອກະພາບ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ ເຮັດໃຫ້ປະເທດເຮົາ ສາມາດສືບຕໍ່ມີການພັດທະນາ, ມີມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເຮັດໃຫ້ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມ ສາມາດບັນລຸໄດ້ຕາມແຜນ ແລະ ເກີນແຜນການຄາດໄວ້ ເຊິ່ງເປັນການປະກອບສ່ວນເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ປະເທດຊາດໄດ້ຮັບການສືບຕໍ່ພັດທະນາຢ່າງຕໍ່ເນື່ອງ.

ບັນດາທ່ານຜູ້ນໍາພັກ-ລັດ, ສະມາຊິກສະພາແຫ່ງຊາດ, ແຂກພາຍໃນ ແລະ ຕ່າງປະເທດ ທີ່ນັບຖື ແລະ ຮັກແພງ!

ປະຕິບັດຕາມລັດຖະທໍາມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສໍາຄັນ ດັ່ງນີ້:

1). ບົດລາຍງານໂດຍສັງເຂບ ຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບການເຄື່ອນໄຫວວຽກງານພົ້ນເດັ່ນກາງສະໄໝ (2021-2023) ແລະ ແຜນການທ້າຍສະໄໝ (2023- 2025), ການເຄື່ອນໄຫວວຽກງານ ປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024;

2). ບົດລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງລັດຖະບານ;

3). ບົດລາຍງານການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງລັດຖະບານ;

4). ບົດລາຍງານການຈັດຕັ້ງປະຕິບັດແຜນເງິນຕາ ກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງລັດຖະບານ;

5). ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023);

6). ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023);

7). ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈໍານວນ 3 ສະບັບ ຄື: ກົດໝາຍວ່າດ້ວຍ ການປ້ອງກັນຊາດ, ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍ ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ;

8). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ທິດທາງແຜນການທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປະຈໍາປີ 2021;

9). ບົດລາຍງານການຈັດຕັ້ງປະຕິບັດແຜນການການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ແຜນການທ້າຍສະໄໝ(2023-2025) ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາປີ 2022;

10). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023) ແລະ ການແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງສານປະຊາຊົນສູງສຸດ;

11). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2023) ແລະ ແຜນການທ້າຍສະໄໝ (2023-2025), ການຈັດຕັ້ງປະຕິບັດແຜນການ ປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງອົງການໄອຍະການປະຊາຊົນສູງສຸດ;

12). ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈໍານວນ 8 ສະບັບ; ໃນນີ້, ມີກົດໝາຍ ສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍ ເຂດເສດຖະກິດພິເສດ ແລະ ຮ່າງກົດໝາຍວ່າດ້ວຍ ການຮັກສາສຸຂະພາບຂັ້ນຕົ້ນ; ກົດໝາຍປັບປຸງ 6 ສະບັບຄື: ກົດໝາຍວ່າດ້ວຍ ການປິ່ນປົວ, ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ, ກົດໝາຍວ່າດ້ວຍ ການບັນຊີ, ກົດໝາຍວ່າດ້ວຍລະບົບການຊໍາລະ, ກົດໝາຍວ່າດ້ວຍ ຜູ້ພິພາກສາ ແລະ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

13). ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ (2021-2025) ແລະ ແຜນການທ້າຍສະໄໝ (2023-2025) ແລະ ການຈັດຕັ້ງປະຕິບັດແຜນການ ປະຈໍາປີ 2023 ແລະ ແຜນການ ປະຈໍາປີ 2024 ຂອງສະພາແຫ່ງຊາດ;

14). ບົດລາຍງານປະເມີນຜົນຄວາມໄວ້ວາງໃຈ ການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ນອກນັ້ນ, ກອງປະຊຸມຄັ້ງນີ້ຍັງຈະໄດ້ຮັບຟັງການຊີ້ແຈງຂອງສະມາຊິກລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຈໍານວນໜຶ່ງ ຕໍ່ຄໍາຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ບັນດາທ່ານທີ່ນັບຖື ແລະ ຮັກແພງ!

ກອງປະຊຸມສະໄໝສາມັນເທື່ອທີ 6 ຄັ້ງນີ້ ຈະໄດ້ພິຈາລະນາຕົກລົງຫຼາຍເນື້ອໃນທີ່ສໍາຄັນ ແລະ ເພື່ອເຮັດໃຫ້ການພິຈາລະນາຮັບຮອງເອົາບັນຫາສໍາຄັນພື້ນຖານຂອງປະເທດຊາດ ທີ່ມີຈໍານວນຫຼາຍຄືດັ່ງກ່າວ ໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນໍາເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນໍາໃຊ້ສິດປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ໃນການສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າຢ່າງເລິກເຊິ່ງ, ປະກອບສ່ວນປະກອບຄໍາເຫັນ ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ສ້າງສັນ, ພາວະວິໄສ, ມີເຫດມີຜົນ, ແທດຕົວຈິງ, ຮັດກຸມ ບົນພື້ນຖານແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທໍາມະນູນ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ພ້ອມທັງ ພ້ອມກັນຊອກຫາວິທີການ, ມາດຕະການແກ້ໄຂບັນດາບັນຫາທີ່ຍັງເປັນຄວາມເປັນຫ່ວງເປັນໄຍຂອງສັງຄົມ, ເປັນບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງຄົມພວກເຮົາໃນປັດຈຸບັນ ເພື່ອສ້າງຄວາມເປັນເອກະພາບສູງ ກັບເນື້ອໃນທີ່ນໍາມາພິຈາລະນາ, ຮັບຮອງໃນກອງປະຊຸມຄັ້ງນີ້ ເພື່ອໃຫ້ມີຄຸນນະພາບ ແລະ ສາມາດນໍາໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາຢ່າງແທ້ຈິງ.

ໃນໂອກາດອັນສະຫງ່າລາສີນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

## ນາຍົກ...

(ຕໍ່ຈາກໜ້າ 1)

ດ້ານຕາມ 4 ເນື້ອໃນ 4 ຄາດໝາຍ; ໄດ້ເອົາໃຈໃສ່ຊີ້ນຳໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຂອງສັງຄົມຢ່າງຕັ້ງໜ້າ ໂດຍຖືເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເປັນໃຈກາງ ເຊິ່ງກໍສາມາດແກ້ໄຂມ້າງລາຍຄະດີຢາເສບຕິດ ແລະ ຈັບຜູ້ຖືກຫາໄດ້ຈຳນວນຫຼາຍສົມຄວນ; ພ້ອມກັນນັ້ນ, ກໍໄດ້ສຸມໃສ່ແກ້ໄຂບັນຫາຜົນກະທົບທີ່ເກີດຂຶ້ນຈາກໄພທຳມະຊາດ ເປັນຕົ້ນ ໄຟໄໝ້ລາມປ່າ ແລະ ໄພນໍ້າຖ້ວມ ທີ່ເກີດຂຶ້ນໃນແຕ່ລະປີ ແລະ ການແກ້ໄຂບັນດາປະກົດການຫຍໍ້ທໍ້ທາງດ້ານຕ່າງໆໃນສັງຄົມດ້ວຍມາດຕະການຕ່າງໆ ລວມທັງການທັບຖົມໂຈມຕີ, ໃສ່ຮ້າຍປ້າຍສີພັກ-ລັດ ແລະ ການນຳຂັ້ນສູງ ຜ່ານສື່ສັງຄົມອອນລາຍ ເຊິ່ງທັງໝົດນັ້ນໄດ້ປະກອບສ່ວນສຳຄັນໃຫ້ແກ່ການຮັບປະກັນສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພໂດຍພື້ນຖານ.

2. ວຽກງານຂົງເຂດເສດຖະກິດ:

1). ການຂະຫຍາຍຕົວທາງດ້ານເສດຖະກິດ:

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະເຄິ່ງສະໄໝຜ່ານມາ (2021-2023) ເສດຖະກິດປະເທດພວກເຮົາສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງສະເລ່ຍໃນລະດັບ 4,03 (ແຜນການ 5 ປີ: ສະເລ່ຍໃນລະດັບ 4 ຂຶ້ນໄປ), ໃນນີ້: ປີ 2021 ຂະຫຍາຍຕົວ 3,5 ແລະ ປີ 2022 ບັນລຸໄດ້ 4,4 ແລະ ປີ 2023 ຄາດວ່າຈະບັນລຸໄດ້ 4,2 (ແຜນການປີ 2023 ແມ່ນ 4,5). ເຖິງຢ່າງໃດກໍຕາມ ຍ້ອນການອ່ອນຄ່າຂອງເງິນກີບ, ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ມີທ່າອ່ຽງຫຼຸດລົງ ຄື ປີ: 2021 ປະຕິບັດໄດ້ 2.595 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 2.022 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1.824 ໂດລາສະຫະລັດ (ແຜນການປີ 2023 ແມ່ນ 1.625 ໂດລາສະຫະລັດ) ແລະ ແຜນການ 5 ປີ: 2.880 ໂດລາສະຫະລັດ; ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ປີ 2021 ປະຕິບັດໄດ້ 2.452 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 1.901 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະບັນລຸໄດ້ 1.712 ໂດລາສະຫະລັດ (ແຜນການປີ 2023: 1.534 ໂດລາສະຫະລັດ ແລະ ແຜນການ 5 ປີ: 2.280 ໂດລາສະຫະລັດ).

2). ການປະຕິບັດແຜນງົບປະມານແຫ່ງລັດ:

- ການຈັດເກັບລາຍຮັບງົບປະມານ: ໃນໄລຍະເຄິ່ງສະໄໝຜ່ານມາ, ລັດຖະບານໄດ້ສຸມໃສ່ປັບປຸງຂົງເຂດລາຍຮັບ-ລາຍຈ່າຍ ດ້ວຍການປັບປຸງກົງຈັກການຈັດຕັ້ງ, ການປັບປຸງໂຄງສ້າງລາຍຮັບ-ລາຍຈ່າຍ, ຕິດພັນກັບການສືບຕໍ່ຫັນເປັນທັນສະໄໝໃນວຽກງານການເງິນ-ງົບປະມານດ້ວຍການປະກອບເຄື່ອງມື ແລະ ພັດທະນາລະບົບຄຸ້ມຄອງ ແລະ ບໍລິການເປັນທັນສະໄໝ ອັນໄດ້ເຮັດວຽກງານໃນຂົງເຂດນີ້ມີການຫັນປ່ຽນທີ່ຕັ້ງໜ້າກວ່າເກົ່າ ແລະ ເຮັດໃຫ້ລັດຖະບານສາມາດເກັບລາຍຮັບໄດ້ເກີນແຜນໃນ 2 ປີ ຕິດຕໍ່ກັນ ແລະ ຄາດວ່າປີ 2023 ກໍຈະລື່ນແຜນການໜ້ອຍໜຶ່ງ.

- ການປະຕິບັດລາຍຈ່າຍງົບປະມານ: ລັດຖະບານໄດ້ສືບຕໍ່ປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດຕາມດຳລັດ 205/ລບ, ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ແລະ ຮັບປະກັນການເບີກຈ່າຍທີ່ຈຳເປັນໄດ້ຕາມປົກກະຕິ ເປັນຕົ້ນ: ເງິນເດືອນ, ເງິນນະໂຍບາຍ, ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ. ໃນປີງົບປະມານ 2021 ແລະ 2022 ສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນ ເຊິ່ງໄດ້ເຮັດໃຫ້ມູນຄ່າການຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ. ສິ່ງສຳຄັນລັດຖະບານຍັງໄດ້ຕົກລົງເພີ່ມເງິນອຸດໜູນຄ່າຄອງຊີບໃຫ້ພະນັກງານລັດຖະກອນ, ພະນັກງານບຳນານ, ເສຍອົງຄະ ທີ່ມີເງິນເດືອນຕໍ່າກວ່າ 1.700.000 ກີບ ແລະ ເພີ່ມເງິນອຸດໜູນອັດຕາກິນເຮືອນຄົວລວມໃຫ້ສອງກຳລັງ ໂດຍເລີ່ມປະຕິບັດງວດ 4 ປີ 2023 ເປັນຕົ້ນໄປ. ນອກນັ້ນ, ຍັງອອກມະຕິ 09/ລບ, ກ່ຽວກັບການປະຕິບັດເງິນນະໂຍບາຍໂມງສອນໃຫ້ຄູສັນຍາຈ້າງໃຫ້ໄດ້ຄືກັນກັບລັດຖະກອນຄູທົ່ວໄປ.

- ການແກ້ໄຂໜີ້ສິນ: ໄດ້ເອົາໃຈໃສ່ແກ້ໄຂໜີ້ສິນການລົງທຶນຂອງລັດ ແລະ ໜີ້ສິນຕ່າງປະເທດ ດ້ວຍມາດຕະການ ແລະ ວິທີການຕ່າງໆຢ່າງເປັນລະບົບ ແລະ ສາມາດປະຕິບັດໄດ້ຕາມແຜນທີ່ກຳນົດໄວ້ ແລະ ມີທ່າອ່ຽງດີຂຶ້ນເປັນກ້າວໆ ສາມາດຮັບປະກັນການຊຳລະໜີ້ສິນທີ່ຄົບກຳນົດໄດ້ທັງໝົດຈຶ່ງເຮັດໃຫ້ປະເທດພວກເຮົາບໍ່ຕົກເປັນປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້.

3) ການຮັກສາສະຖຽນລະພາບດ້ານເງິນຕາ

ໃນສະພາບທີ່ອັດຕາເງິນເຟີ້ສູງ ແລະ ອັດຕາແລກປ່ຽນມີຄວາມຜັນຜວນ, ເພື່ອແກ້ໄຂບັນຫາດັ່ງກ່າວ ລັດຖະບານໄດ້ຊີ້ນຳໃຫ້ທະນາຄານ ແຫ່ງ ສປປ ລາວ ຈັດຕັ້ງປະຕິບັດມາດຕະການຄື:

- ຍຶດໝັ້ນໃນການຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບຮັດກຸມ ໂດຍນຳໃຊ້ທຸກເຄື່ອງມືທີ່ທະນາຄານ ແຫ່ງ ສປປ ລາວ ມີຢ່າງປະສົມປະສານໃນການຄວບຄຸມປະລິມານເງິນ M2 ໃຫ້ຢູ່ໃນລະດັບເໝາະສົມ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ. ຄຽງຄູ່ກັນນັ້ນ, ໄດ້ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃນທິດທາງທີ່ມີຄວາມຍືດຍຸ່ນຫຼາຍກວ່າເກົ່າ ແລະ ດັດສົມຄວາມຕ້ອງການເງິນຕາຕ່າງປະເທດໃຫ້ແກ່ສິນຄ້ານຳເຂົ້າບູລິມະສິດເປັນຕົ້ນ: ການສະໜອງເງິນຕາໃຫ້ແກ່ການນຳເຂົ້ານໍ້າມັນເຊື້ອໄຟໃຫ້ພຽງພໍກັບຄວາມຕ້ອງການ ເພື່ອການຜະລິດ ແລະ ການຊົມໃຊ້, ໄດ້ດັດສົມບັນດາຮ້ານແລກປ່ຽນເງິນຕາຕ່າງປະເທດ ດ້ວຍການຍຸບເລີກທັງໝົດ ແລະ ຫັນມາໃຫ້ລວມສູນນຳບັນດາທະນາຄານທຸລະກິດ ພ້ອມທັງກວດກາການເຄື່ອນໄຫວຂອງກຸ່ມຄົນທີ່ສວຍໂອກາດແລກປ່ຽນປັ່ນປ່ວນອັດຕາແລກປ່ຽນ; ໄດ້ຊີ້ນຳໃຫ້ ທຫລ ແລະ ທຸກຂະແໜງການປິ່ນອ້ອມປັບປຸງບູລະນະການຄຸ້ມຄອງເງິນຕາຕ່າງປະເທດ ຢ່າງເປັນລະບົບຫຼາຍຂຶ້ນ. ອັນພົ້ນເດັ່ນແມ່ນການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ອອກນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ ໂດຍສະເພາະໄດ້ອອກຄຳສັ່ງເລກທີ 10/ນຍ ທີ່ກຳນົດໃຫ້ທຸກຂະແໜງການຕ້ອງປະຕິບັດລະບຽບການຄຸ້ມຄອງການນຳເຂົ້າ-ສົ່ງອອກ, ການລົງທຶນໂດຍກົງຈາກຕ່າງປະເທດ ແລະ ການກູ້ຢືມ

ອ່ານຕໍ່ສະບັບໜ້າ

## ການຈັດຕັ້ງ...

(ຕໍ່ຈາກໜ້າ 1)

2025) ຄັ້ງທີ IX ແລະ ການຈັດຕັ້ງປະຕິບັດແຜນເງິນຕາໃນປີ 2023

1. ການຈັດຕັ້ງປະຕິບັດມາດຕະການໄລຍະກາງສະໄໝ

ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ໄດ້ເກີດມີເຫດການທີ່ບໍ່ຄາດຄິດເກີດຂຶ້ນທີ່ເປັນອຸປະສັກໃຫຍ່ຫຼວງໃນການຮັກສາສະຖຽນລະພາບດ້ານເງິນຕາຂອງ ທຫລ ເຊັ່ນ: ການແຜ່ລະບາດຂອງພະຍາດໂຄວິດ 19, ຂໍ້ຂັດແຍ່ງທາງດ້ານການທະຫານ, ການຄວບຄຸມເງິນເຟີ້ໃນທົ່ວໂລກດ້ວຍການຂຶ້ນອັດຕາດອກເບ້ຍອ້າງອີງສູງ, ຍາວ ແລະ ຕໍ່ເນື່ອງ, ການເພີ່ມຂຶ້ນຂອງລາຄານໍ້າມັນ ສົມທົບໃສ່ສະພາບພາຍໃນ ຂອງ ສປປ ລາວ ທີ່ເສດຖະກິດມະຫາພາກມີຄວາມບໍ່ສົມດຸນຢູ່ແລ້ວ ຈາກການນຳເຂົ້າ ແລະ ພັນທະໜີ້ສິນຕໍ່ຕ່າງປະເທດສະສົມສູງສົມຄວນ ພາໃຫ້ອັດຕາແລກປ່ຽນມີຄວາມຜັນຜວນ ແລະ ອັດຕາເງິນເຟີ້ສູງ, ແຕ່ ທຫລ ກໍໄດ້ສູ້ຊົນສຸມໃສ່ປະຕິບັດທຸກມາດຕະການ ແລະ ນຳໃຊ້ທຸກເຄື່ອງມືທີ່ມີຢ່າງປະສົມປະສານ ແລະ ມີໄຫວພິບເພື່ອຕອບຕ້ານກັບບັນຫາດັ່ງກ່າວ ດັ່ງລາຍລະອຽດລຸ່ມນີ້:

1) ດ້ານນະໂຍບາຍເງິນຕາ.

ພາຍຫຼັງການແຜ່ລະບາດພະຍາດໂຄວິດ-19 ຄືຄາຍລົງ, ເລີ່ມໄລຍະກາງປີ 2022 ເປັນຕົ້ນມາ ເສດຖະກິດຂອງພວກເຮົາຊໍ້າພັດໄດ້ຮັບຜົນກະທົບຈາກຂໍ້ຂັດແຍ່ງດ້ານການທະຫານ, ທຫລ ຈຶ່ງໄດ້ຫັນທິດທາງການດຳເນີນນະໂຍບາຍເງິນຕາຈາກຜ່ອນຄາຍມາເປັນຮັດກຸມ ໂດຍ:

+ ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ 3 ຄັ້ງ ຈາກ 3%/ປີ ເປັນ 7,5%/ປີ;

+ ໄດ້ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ 3 ຄັ້ງ ຄື: ຈາກ 3% ເປັນ 8% ສຳລັບສະກຸນເງິນກີບ ແລະ ຈາກ 5% ມາເປັນ 10% ສຳລັບສະກຸນເງິນຕາຕ່າງປະເທດ;

+ ອອກ ແລະ ຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນໃຫ້ແກ່ມວນຊົນ 5 ຄັ້ງ ໃນວົງເງິນ 12.000 ຕື້ກີບ ແລະ ອອກຜະລິດຕະພັນເງິນຝາກປະຈຳ ທຫລ ໄລຍະ 7 ວັນ ແລະ ພັນທະບັດ ທຫລ ໄລຍະສັ້ນ ໃນຕະຫຼາດເປີດ ຈຳນວນ 4.000 ຕື້ກີບ;

+ ປະກອບສ່ວນໃນການແກ້ໄຂສະພາບຄ່ອງດ້ານງົບປະມານ ພາຍໃຕ້ກອບກົດໝາຍ ດ້ວຍການຈັດຕັ້ງປະຕິບັດການປະມູນພັນທະບັດຄັງເງິນຢູ່ ທຫລ ເພື່ອຈຳໜ່າຍໃຫ້ທະນາຄານທຸລະກິດແລະກອງທຶນຕ່າງໆ ;

+ ຄົ້ນຄວ້າແກ້ໄຂບັນຫາດ້ານແຫຼ່ງທຶນ ທີ່ຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດ;

+ ສືບຕໍ່ປະກອບສ່ວນແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ໄດ້ອອກນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ເຊິ່ງຜັນຂະຫຍາຍຈາກຂໍ້ຕົກລົງວ່າດ້ວຍການຈັດຕັ້ງນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ; ພ້ອມນັ້ນ, ກໍໄດ້ສຳເລັດການແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍຢູ່ບັນດາແຂວງ;

+ ປະກອບສ່ວນປະຕິບັດການແກ້ໄຂບັນຫາໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບການອ່າຍໜີ້ 3 ແຈ ໂດຍໄດ້ຮັບຊື້ພັນທະບັດບ້ວງອ່າຍໜີ້ 3 ແຈ ຈຳນວນໜຶ່ງ ເພື່ອຊ່ວຍເພີ່ມສະພາບຄ່ອງໃຫ້ແກ່ທະນາຄານທຸລະກິດ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ສາມາດສະໜອງສິນເຊື່ອໃຫ້ພາກສ່ວນເສດຖະກິດໄດ້ຫຼາຍຂຶ້ນ; ພ້ອມກັບໄດ້ຍົກເລີກນະໂຍບາຍການຄຸ້ມຄອງອັດຕາດອກເບ້ຍຂອງ ທທກ ເພື່ອໃຫ້ການກຳນົດອັດຕາດອກເບ້ຍໃຫ້ເປັນໄປຕາມກົນໄກຕະຫຼາດ ແລະ ເພື່ອຍົກສູງປະສິດທິຜົນໃນການດຳເນີນທຸລະກິດຂອງທະນາຄານທຸລະກິດ. ຮອດທ້າຍເດືອນ 09/2023 ທະນາຄານທຸລະກິດ ກຳລັງສືບຕໍ່ປະຕິບັດນະໂຍບາຍຜ່ອນຜັນດ້ານສິນເຊື່ອ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ທັງໝົດ ຈຳນວນ 2.745 ລາຍ.

+ ສຳລັບສິນເຊື່ອທີ່ປ່ອຍໃຫ້ SMEs ຮອດທ້າຍເດືອນ 9/2023 ມີທັງໝົດ 16.300,02 ຕື້ກີບ ກວມເອົາ 10,42% ຂອງຍອດສິນເຊື່ອທົ່ວລະບົບທະນາຄານທຸລະກິດ. ຄຽງຄູ່ກັນນີ້ ໄດ້ປະຕິບັດຕາມນະໂຍບາຍແກ້ໄຂຄວາມທຸກຍາກຂອງປະຊາຊົນຢູ່ເຂດຊົນນະບົດ ໂດຍການປ່ອຍສິນເຊື່ອຜ່ານທະນາຄານນະໂຍບາຍຈຳນວນ 2,589.01 ຕື້ກີບ.

+ ໄດ້ປະຕິບັດນະໂຍບາຍສະເພາະຂອງລັດຖະບານເປັນຕົ້ນໄດ້ຄົ້ນຄວ້ານະໂຍບາຍສິນເຊື່ອສົ່ງເສີມ SMEs ໃນອັດຕາດອກເບ້ຍຕໍ່າ ເຊັ່ນ: ບ້ວງ 200 ຕື້ກີບຕໍ່ປີ ຜ່ານກອງທຶນສົ່ງເສີມ SMEs, ກອງທຶນພັດທະນາໄຊສົມບູນ, ບ້ວງກອງທຶນ LAFF ໃນການຈັດຕັ້ງປະຕິບັດການສະໜອງສິນເຊື່ອໃຫ້ SMEs ໂດຍຜ່ານສະຖາບັນການເງິນທີ່ເຂົ້າຮ່ວມໂຄງການ.

1) ດ້ານນະໂຍບາຍອັດຕາແລກປ່ຽນ.

ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃນທິດທາງຢືດຢຸ່ນຂຶ້ນ ໂດຍຂະຫຍາຍຂອບການກຳນົດອັດຕາແລກປ່ຽນທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ ຈຳນວນ 3 ຄັ້ງຄື: ຈາກລະດັບ 0,25% ມາເປັນ 7,5%; ໄດ້ດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າຍຸດທະສາດ ໂດຍສະເພາະແມ່ນນໍ້າມັນເຊື້ອໄຟ ໃນການຮັບມືກັບສະພາບລາຄານໍ້າມັນເຊື້ອໄຟ ຢູ່ໃນສາກົນທີ່ເພີ່ມຂຶ້ນແບບກ້າວກະໂດດ ໂດຍສົມທົບກັບກະຊວງການເງິນ, ແລະ ສິນຄ້າປະເພດອື່ນອີກເຊັ່ນ: ຢາປົວພະຍາດ ແລະ ອຸປະກອນການແພດ, ອາຍແກັສ, ໂທລະຄົມມະນາຄົມ, ກະສິກຳ (ປຸ໋ຍ, ອຸປະກອນການກະເສດ), ວັດສະດຸ ແລະ ອຸປະກອນກໍ່ສ້າງ, ພາຫະນະສຳລັບຮັບໃຊ້ການຜະລິດ ແລະ ທຫລ ຍັງໄດ້ດັດສົມພັນທະຊຳລະໜີ້ສິນຕໍ່ຕ່າງປະເທດ ແລະ ວຽກງານຈຳເປັນອື່ນໆຂອງຊາດ; ໄດ້ຫັນເອົາຮ້ານແລກປ່ຽນທີ່ໄດ້ຮັບອະນຸຍາດທັງໝົດ 550 ແຫ່ງ ໃນຂອບເຂດທົ່ວປະເທດໃຫ້ເປັນຮ້ານຕົວແທນຂອງທະນາຄານທຸລະກິດໃນປີ 2021 ແລະ ໃນປີ 2023 ໄດ້ສືບຕໍ່ດັດສົມເຫຼືອ 419 ແຫ່ງ ພ້ອມທັງໄດ້ອອກແຈ້ງການຍຸດຕິການອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ ສະບັບເລກທີ 01/ທຫລ, ລົງວັນທີ 13 ມັງກອນ 2023, ໂດຍໄດ້ກຳນົດໃຫ້ບັນດາທະນາຄານທຸລະກິດ ຢຸດເຊົາການຕໍ່ອາຍຸສັນຍາ ແລະ ຍົກເລີກສັນຍາຕົວແທນບໍລິການແລກປ່ຽນເງິນຕາກັບຮ້ານແລກ

ອ່ານຕໍ່ສະບັບໜ້າ

## ຕາງໜ້າ...

(ຕໍ່ຈາກໜ້າ 1)

ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໃນເຄິ່ງສະໄໝ ຂອງແຜນ 5 ປີ ແລະ ການເຄື່ອນໄຫວວຽກງານປະຈຳປີ 2023.

ຜ່ານການຮັບຟັງການລາຍງານ, ຄະນະປະຈຳສະພາແຫ່ງຊາດ ເຫັນດີຕໍ່ບົດລາຍງານຂອງລັດຖະບານ ເຊິ່ງສະແດງເຖິງຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໃນເຄິ່ງສະໄໝຂອງແຜນ 5 ປີ ໃນທ່າມກາງສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ພວມມີຄວາມຜັນແປຢ່າງສັບສົນ ໂດຍສະເພາະບັນຫາເງິນເຟີ້, ລາຄານ້ຳມັນ, ອັດຕາແລກປ່ຽນ ແລະ ຂໍ້ຂັດແຍ່ງທາງດ້ານເສດຖະກິດ, ການທະຫານ-ການເມືອງ, ການແຜ່ລະບາດຂອງພະຍາດໂຄວິດ-19 ບວກກັບຂໍ້ຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ປະກົດການຫຍໍ້ທໍ້ຂອງສັງຄົມ, ແຕ່ລັດຖະບານກໍຍັງໄດ້ນຳພາຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເຄິ່ງສະໄໝ, ເຊິ່ງສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນບາງດ້ານ ດັ່ງນີ້:

1. ການເຕີບໂຕເສດຖະກິດ ໃນ 2 ປີເຄິ່ງຜ່ານມາ ສະເລ່ຍໃນລະດັບ 4,03% (ມະຕິສະພາ 4%), ການເຕີບໂຕຂອງຂະແໜງການ ແລະ ການຫັນປ່ຽນໂຄງປະກອບເສດຖະກິດສາມາດປະຕິບັດໄດ້ລື່ນຄາດໝາຍທີ່ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດ;

2. ການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໄດ້ຮັບການຈັດຕັ້ງປະຕິບັດສຳເລັດໃນຫຼາຍຂົງເຂດການຜະລິດ ແລະ ບໍລິການທີ່ເປັນພື້ນຖານສຳຄັນໃຫ້ແກ່ການເຕີບໂຕເສດຖະກິດໃນໄລຍະກາງ ແລະ ໄລຍະຍາວ;

3. ສາມາດເກັບລາຍຮັບເຂົ້າງົບປະມານແຫ່ງລັດໄດ້ລື່ນຄາດໝາຍ, ລາຍຮັບພາຍໃນສາມາດກຸ້ມລາຍຈ່າຍປົກກະຕິ ແລະ ມີສ່ວນເຫຼືອເພື່ອຊຳລະໜີ້ສິນ, ປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟຸມເຟືອຍ;

4. ການປະຕິບັດນະໂຍບາຍເງິນຕາມີຄວາມຄືບໜ້າ ເປັນຕົ້ນການສ້າງຄວາມເຂັ້ມແຂງຄັງແຮສຳຮອງເງິນຕາ, ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ການຄຸ້ມຄອງໜີ້ສິນທີ່ບໍ່ເກີດດອກອອກຜົນ ກໍມີຄວາມຄືບໜ້າດີພໍສົມຄວນ;

5. ການຈັດຕັ້ງປະຕິບັດ 45 ຄາດໝາຍ ໃນຂົງເຂດວັດທະນະທຳ-ສັງຄົມ ມີ 21 ຄາດໝາຍສາມາດບັນລຸອັນພົ້ນເດັ່ນ ແມ່ນອັດຕາການຈົບຊັ້ນປະຖົມສຶກສາ, ການຝຶກອົບຮົມຄູຊັ້ນປະຖົມ, ມັດທະຍົມ; ການສ້າງບ້ານສາທາລະນະສຸກແບບຢ່າງເພີ່ມຂຶ້ນ, ອັດຕາການຕາຍຂອງເດັກລຸ່ມ 1 ປີ, 5 ປີ ແລະ ອັດຕາການຕາຍຂອງແມ່ຫລຸດລົງ; ການຝຶກອົບຮົມ ແລະ ພັດທະນາສີມືແຮງງານຕາມສາຂາວິຊາຊີບຕ່າງໆ; ການຂະຫຍາຍລະບົບໂທລະໂຄງຢູ່ຂັ້ນບ້ານເພີ່ມຂຶ້ນ;

6. ການປະຕິບັດຄາດໝາຍໃນຂົງເຂດຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ການຄຸ້ມຄອງບໍລິຫານລັດ ກໍໄດ້ມີຄວາມຄືບໜ້າຫຼາຍດ້ານ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ອີງຕາມການລາຍງານຂອງລັດຖະບານ ແລະ ການຕິດຕາມກວດກາ ຂອງສະພາແຫ່ງຊາດ ເຫັນວ່າ ມີຫຼາຍຄາດໝາຍທີ່ມີຄວາມສ່ຽງ ທີ່ຈະບໍ່ສາມາດປະຕິບັດບັນລຸໄດ້ຕາມແຜນການ ເປັນຕົ້ນ:

1. ອັດຕາການເຕີບໂຕຂອງເສດຖະກິດ ເຖິງວ່າບັນລຸໄດ້ 4,03%, ແຕ່ວ່າລາຍຮັບຕົວຈິງແມ່ນລຸດລົງຫຼາຍ ຍ້ອນໄພເງິນເຟີ້ ແລະ ການຜັນຜວນຂອງອັດຕາແລກປ່ຽນ ເປັນຕົ້ນລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕໍ່ຫົວຄົນ ບັນລຸໄດ້ພຽງແຕ່ 2.147 ໂດລາສະຫະລັດ (ມະຕິສະພາ 2.880 ໂດລາສະຫະລັດ), ລວມຍອດລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນ ບັນລຸໄດ້ 2.021 ໂດລາສະຫະລັດ (ມະຕິສະພາ 2.280 ໂດລາສະຫະລັດ); ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳປຸງແຕ່ງ, ຫັດຖະກຳ ແລະ ບໍລິການ ຍັງບໍ່ທັນບັນລຸຕາມມະຕິສະພາແຫ່ງຊາດກຳນົດໄວ້;

2. ການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ, ການສົ່ງເສີມການສົ່ງອອກ ແລະ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ບໍ່ທັນໄດ້ດີປານໃດ ການເຂົ້າເຖິງກອງທຶນຍັງມີຄວາມຫຍຸ້ງຍາກ; ການຄຸ້ມຄອງການຂຸດຄົ້ນແຮ່ທາດ ແລະ ຊັບພະຍາກອນທຳມະຊາດ, ການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງ 3 ປະເພດປ່າຍັງມີຫຼາຍບັນຫາທີ່ສັງຄົມມີຄວາມເປັນຫ່ວງ;

3. ການປະຕິບັດແຜນງົບປະມານ ໂດຍສະເພາະການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ບໍ່ທັນຄົບຖ້ວນ ແລະ ລວມສູນເປັນຕົ້ນການຄຸ້ມຄອງການເກັບລາຍຮັບຈາກການຂຸດຄົ້ນແຮ່ທາດ, ການຄຸ້ມຄອງຈັດຮັບ-ຈັດຈ່າຍ ຂອງກອງທຶນລັດ ແລະ ຫົວໜ່ວຍວິຊາການ; ຫົວໜ່ວຍງົບປະມານຂັ້ນຕ່າງໆ ຍັງມີການລະເມີດວິໄນແຜນການ, ການເງິນ, ຍັງມີຫຼາຍກອງທຶນທີ່ຍັງບໍ່ທັນມີການລວມສູນ;

4. ການປະຕິບັດແຜນເງິນຕົ້ນຕໍດ້ານເງິນຕາທີ່ບໍ່ສາມາດບັນລຸຕາມຄາດໝາຍ ແມ່ນການຢັບຢັ້ງໄພເງິນເຟີ້ ແລະ ການຜັນຜວນຂອງອັດຕາແລກປ່ຽນ, ການຄຸ້ມຄອງເງິນຕາຕ່າງປະເທດຈາກການສົ່ງອອກຍັງບໍ່ທັນໄດ້ຕາມຄາດໝາຍ;

5. ການຈັດຕັ້ງປະຕິບັດຄາດໝາຍຂົງເຂດວັດທະນະທຳ-ສັງຄົມ ຍັງມີ 24 ຄາດໝາຍ ບໍ່ທັນຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ທັງມີຄວາມສ່ຽງທີ່ຈະບໍ່ບັນລຸ ເປັນຕົ້ນອັດຕາປະລະການຮຽນຂອງນັກຮຽນ, ອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ, ຝຶກອົບຮົມວິຊາຊີບ ແລະ ການສຶກສາຊັ້ນສູງຍັງຕ່ຳ; ອັດຕາການປົກຄຸມການປະກັນສຸຂະພາບແຫ່ງຊາດ, ອັດຕາການເກີດລູກມີແພດຊ່ວຍ, ອັດຕາການໃຫ້ວັກຊີນກັນພະຍາດ, ອັດຕາຊົມໃຊ້ນ້ຳສະອາດ; ການສ້າງຖານຂໍ້ມູນ ແລະ ການຄຸ້ມຄອງແຮງງານບໍ່ທັນໄດ້ດີ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ຍັງເຮັດໄດ້ໜ້ອຍ, ອັດຕາການຂະຫຍາຍສະມາຊິກປະກັນສັງຄົມໃນຫົວໜ່ວຍແຮງງານ, ຫົວໜ່ວຍທຸລະກິດ ແລະ ຜູ້ສະໝັກໃຈຍັງຕ່ຳ; ການໂຄສະນາການທ່ອງທ່ຽວລາວ, ການປັບປຸງຄຸນນະພາບການບໍລິການ ແລະ ສ້າງຜະລິດຕະພັນການທ່ອງທ່ຽວບໍ່ທັນຫຼາກຫຼາຍ;

6. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບວຽກງານສາມສ້າງ ຍັງບໍ່ທັນມີຄວາມຄືບໜ້າເທົ່າທີ່ຄວນ ອັດຕາຄວາມທຸກຍາກຍັງມີທ່າອ່ຽງເພີ່ມຂຶ້ນ;

7. ການປະຕິບັດຄາດໝາຍໃນຂົງເຂດຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ເຫັນວ່າມີຄວາມຄືບໜ້າຊ້າ ແລະ ຈະບໍ່ສາມາດບັນລຸຕາມຄາດໝາຍເປັນຕົ້ນການຂຶ້ນທະບຽນອອກໃບຕາດິນ;

8. ການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍຍັງບໍ່ທັນມີຜົນສັກສິດເທົ່າທີ່ຄວນ, ປະກົດການຫຍໍ້ທໍ້ໃນຂົງເຂດໄອຍະການ, ສານ ແລະ ການປະຕິບັດຄຳຕັດສິນຂອງສານຍັງບໍ່ທັນເຂັ້ມງວດ; ການແກ້ໄຂຜົນການກວດສອບ ແລະ ກວດກາລັດ ຍັງມີຊັກຊ້າ ແລະ ປະຕິບັດບໍ່ເດັດຂາດເຂັ້ມງວດ ພາໃຫ້ມີສຽງສະທ້ອນຈາກສັງຄົມຍັງຫຼາຍ.

**II.** ຕໍ່ກັບພາກທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ແຜນການ ປະຈຳປີ 2024

ຄະນະປະຈຳສະພາແຫ່ງຊາດ ເຫັນດີຕໍ່ທິດທາງແຜນການທ້າຍສະໄໝ ຮອດປີ 2025 ແລະ ແຜນການ ປະຈຳປີ 2024 ຂອງລັດຖະບານ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດດັ່ງກ່າວ ສະເໜີບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ປະຕິບັດທິດທາງລວມ, ເປົ້າໝາຍລວມ ແລະ ແຜນວຽກຈຸດສຸມຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ປະກົດຜົນເປັນຈິງ, ມີປະສິດທິພາບ ແລະ ປະສິດທິຜົນ ແລະ ປະຕິບັດຕາມຈິດໃຈຂອງກອງປະຊຸມສູນກາງພັກ ທີ່ຫາກໍອັດລົງໃນອາທິດກ່ອນ;

2. ສູ້ຊົນໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວເພີ່ມຂຶ້ນ ສະເລ່ຍ 4% ຂຶ້ນໄປຕໍ່ປີ ແລະ ເຮັດໃຫ້ GDP ຕໍ່ຫົວຄົນ ບັນລຸໄດ້ຕາມຄາດໝາຍ; ຮັບປະກັນໃຫ້ຂະແໜງບໍລິການກວມອັດຕາສ່ວນຫຼາຍ ໃນໂຄງປະກອບເສດຖະກິດ;

3. ສູ້ຊົນປະຕິບັດແຜນເງິນຕາ, ປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ນະໂຍບາຍການເງິນ, ເງິນຕາ, ການຜະລິດ, ການຄ້າ ແລະ ຈິດຕະສາດດ້ານສັງຄົມ; ຄວບຄຸມອັດຕາເງິນເຟີ້ ສະເລ່ຍໃຫ້ຢູ່ໃນລະດັບ 1 ຕົວເລກ, ຄຸ້ມຄອງອັດຕາແລກປ່ຽນ ຢູ່ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້; ສູ້ຊົນໃຫ້ປະລິມານເງິນ M2 ຂະຫຍາຍຕົວສອດຄ່ອງກັບລະດັບດຸນຍະພາບການຂະຫຍາຍຕົວຂອງເສດຖະກິດ; ເອົາໃຈໃສ່ເພີ່ມຄັງສຳຮອງເງິນຕາຕ່າງປະເທດໃຫ້ສາມາດກຸ້ມການນຳເຂົ້າບໍ່ຫຼຸດ 5 ເດືອນ ແລະ ຄຸ້ມຄອງລາຍຮັບເງິນຕາຈາກການສົ່ງອອກ ແລະ ການນຳເຂົ້າທຶນຈົດທະບຽນຂອງການລົງທຶນຕ່າງປະເທດ ໃຫ້ຜ່ານລະບົບທະນາຄານ ໃຫ້ໄດ້ 60% ຂຶ້ນໄປ;

4. ສືບຕໍ່ສູ້ຊົນປະຕິບັດຕາມທິດທາງລວມ ແລະ ຄາດໝາຍທີ່ກຳນົດໄວ້ ໃນແຜນພັດທະນາຂະແໜງການເງິນແຫ່ງລັດ ໂດຍໃຫ້ມີການຫັນປ່ຽນ ແລະ ບຸກທະລຸ ໃນຂົງເຂດຈັດເກັບລາຍຮັບ ແລະ ຫັນເປັນທັນສະໄໝຢ່າງແຂງແຮງ, ໂດຍສະເພາະສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ເກີນດຸນ ໃຫ້ໄດ້ 18% ຂອງ GDP ຂຶ້ນໄປ;

5. ຂົງເຂດວັດທະນະທຳ-ສັງຄົມ ສຸມໃສ່ປັບປຸງຄຸນນະພາບລະບົບການຮຽນ-ການສອນ ໃຫ້ຕອບສະໜອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນ, ຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ໃນການແກ້ໄຂການຂາດແຄນຄູ ແລະ ຄູສອນລວມທັງການແກ້ໄຂການປະລະການຮຽນ ໃຫ້ປະກົດຜົນເປັນຈິງ, ຫັນການສຶກສາເປັນດິຈິຕອນເທື່ອລະກ້າວ; ຈັດຕັ້ງປະຕິບັດວຽກງານສົ່ງເສີມສຸຂະພາບ, ການກັນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດຕິດຕໍ່, ຍົກສູງຄຸນນະພາບການປິ່ນປົວໃຫ້ໄດ້ມາດຕະຖານ ລວມທັງຈັນຍາບັນຈັນຍາທຳຂອງບຸກຄະລາກອນສາທາລະນະສຸກ, ຊຸກຍູ້ສົ່ງເສີມການຄົ້ນຄວ້າການແພດ ແລະ ການຢາພື້ນເມືອງ; ປັບປຸງກອງທຶນປະກັນສຸຂະພາບ ແລະ ກອງທຶນປະກັນສັງຄົມ ໃຫ້ມີປະສິດທິຜົນ, ຝຶກ ແລະ ພັດທະນາສີມືແຮງງານລະຫວ່າງພາກສ່ວນຕ່າງໆໃຫ້ມີຄວາມກົມກຽວ ແລະ ໄດ້ມາດຕະຖານສາກົນ, ຄຸ້ມຄອງ, ດັດສົມແຮງງານໃຫ້ສົມດຸນ ແລະ ມີຄວາມຍືນຍົງ; ສ້າງຜະລິດຕະພັນການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍໄດ້ມາດຕະຖານ, ໂຄສະນາ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວ ໃນການເປີດປີທ່ອງທ່ຽວລາວ 2024 ໃຫ້ມີປະສິດທິຜົນ, ເອົາໃຈໃສ່ປະຕິບັດບັນດາຄາດໝາຍດ້ານບົດບາດຍິງ-ຊາຍ ໃຫ້ປະກົດຜົນເປັນຈິງ;

6. ເອົາໃຈໃສ່ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະສືບຕໍ່ສູ້ຊົນໃຫ້ເນື້ອທີ່ປ່າໄມ້ ກວມ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025, ຊຸກຍູ້ສົ່ງເສີມການຟື້ນຟູປ່າໄມ້ ໃຫ້ໄດ້ 1.800.000 ເຮັກຕາ ແລະ ປູກໄມ້ໃຫ້ໄດ້ 200.000 ເຮັກຕາ, ປ້ອງກັນ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້, ໄຟໃໝ້ປ່າ ແລະ ໄພທຳມະຊາດໃຫ້ທັນການ, ສືບຕໍ່ໂຄງການອອກໃບຕາດິນຕາມຄວາມສາມາດຕົວຈິງຂອງງົບປະມານ;

7. ສືບຕໍ່ພັດທະນາພື້ນຖານໂຄງລ່າງການກໍ່ສ້າງປັບປຸງເສັ້ນທາງໃຫ້ໄດ້ຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໃຫ້ສຳເລັດຕາມແຜນທີ່ກຳນົດໄວ້, ພ້ອມທັງປັບປຸງລະບົບຂົນສົ່ງຕ່າງໆໃຫ້ມີຄວາມວ່ອງໄວ, ທັນສະໄໝ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; ເອົາໃຈໃສ່ຜັນຂະຫຍາຍວຽກງານການຫັນເປັນທັນສະໄໝໃຫ້ກວ້າງຂວາງ ໄປຄຽງຄູ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດດີຈິຕອນໃຫ້ປາກົດຜົນເປັນຈິງ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ;

8. ກຳນົດມາດຕະການທີ່ເໝາະສົມ ໃນການສືບຕໍ່ຈັດຕັ້ງປະຕິບັດຄາດໝາຍ ໃນຂົງເຂດພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ການຄຸ້ມຄອງບໍລິຫານລັດ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

9. ທິດທາງການລົງທຶນຂອງລັດ ໃນໄລຍະທ້າຍສະໄໝ ແລະ ແຜນການປີ 2024 ຄວນຈະສູມໃສ່ແກ້ໄຂໄພພິບັດ, ຟື້ນຟູພື້ນຖານໂຄງລ່າງທີ່ເປ່ເພ, ຈັດສັນ 10% ຂອງງົບປະມານໃສ່ການລົງທຶນປ້ອງກັນຕາຝັ່ງເຈື່ອນ, ນຳໃຊ້ເງິນເກີນແຜນຂອງທ້ອງຖິ່ນ ສຸມໃສ່ແກ້ໄຂໜີ້ສິນ ແລະ ສຳເລັດໂຄງການທີ່ຍັງສືບຕໍ່ປະຕິບັດ, ສະເໜີໃຫ້ມີການລົງທຶນໃສ່ຂະແໜງສຶກສາ, ສາທາ ແລະ ວັດທະນະທຳ-ສັງຄົມຕື່ມໃນຂອບເຂດຄືສິກປີ 2023, ຈຳກັດໂຄງການສະເໜີໃໝ່ ແລ້ວໃຫ້ນຳສະເໜີບັນຊີໂຄງການລົງທຶນຂອງລັດຕໍ່ກອງປະຊຸມສະໄໝສາມັນຄັ້ງນີ້ ເພື່ອພິຈາລະນາຮັບຮອງໃຫ້ທັນຈັດຕັ້ງປະຕິບັດໃນວັນທີ 1 ມັງກອນ 2024.

ທັງໝົດທີ່ກ່າວມາຂ້າງເທິງນີ້ ແມ່ນບາງທັດສະນະ ແລະ ຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການ ທ້າຍສະໄໝ ຮອດປີ 2025, ການເຄື່ອນໄຫວວຽກງານປະຈຳປີ 2023, ແຜນການ ປະຈຳປີ 2024 ເພື່ອເປັນພື້ນຖານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນໃຫ້ລັດຖະບານນຳໄປຈັດຕັ້ງປະຕິບັດ.

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5




(ສພຊ) ກອງປະຊຸມເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອັດຕະປື ຊຸດທີ II ໄດ້ຈັດຂຶ້ນໃນວັນທີ 24 ຕຸລາ 2023 ທີ່ຫໍປະຊຸມໃຫຍ່ຂອງແຂວງ ໂດຍການເຜີຍແຜ່ຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ປະທານສະພາປະຊາຊົນແຂວງອັດຕະປື ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ສອງທ່ານ; ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເລຂາທິການສະພາປະຊາຊົນແຂວງ, ພະແນກການ, ອົງການທຽບເທົ່າ, ສອງກຳລັງ ປກສ-ປກຊ ແລະ ພະນັກງານ-ລັດຖະກອນຫຼັກແຫຼ່ງອ້ອມຂ້າງແຂວງເຂົ້າຮ່ວມ 300 ກວ່າທ່ານ.

ໃນກອງປະຊຸມ, ບັນດາທ່ານສະມາຊິກສະພາແຫ່ງຊາດໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອັດຕະປື ຊຸດທີ II ເປັນຕົ້ນແມ່ນເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ເຊິ່ງໃນນັ້ນ ກອງປະຊຸມສະພາແຫ່ງຊາດໄດ້ສະເໜີໃຫ້ລັດຖະບານ ເພີ່ມທະວີຄວາມເອົາໃຈໃສ່ໃນແກ້ໄຂບັນຫາທີ່ສັງຄົມເປັນຫ່ວງເຊັ່ນ: ການແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນເໜັງຕີງແຮງ, ຄ່າຄອງຊີບສູງຂຶ້ນເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນບັນດາເຜົ່າ; ແກ້ໄຂບັນຫາການຈັດສັນການລົງທຶນຂອງລັດໃຫ້ທັນເວລາ; ການແກ້ໄຂບັນຫາຂອງຄູ, ແພດອາສາສະໝັກ, ບັນຫາຄຸນນະພາບການສຶກສາ, ສາທາລະນະສຸກ, ບັນຫາສະຫວັດດີການສັງຄົມ, ບັນຫາແຮງງານ, ບັນຫາການຂຸດຄົ້ນແຮ່ທາດແບບທົດລອງ ແລະ ອື່ນໆ; ທັງໝົດນີ້ແມ່ນສິບຕໍ່ຈະຕ້ອງສຸມໃສ່ປັບປຸງ, ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ເປັນບັນຫາເຄັ່ງຮ້ອນໃນປັດຈຸບັນໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ ແລະ ເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ບົດລາຍງານ ກ່ຽວກັບຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2040, ບົດລາຍງານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030, ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ, ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ; ໃນນັ້ນມີກົດໝາຍສ້າງໃໝ່ 4 ສະບັບຄື: ກົດໝາຍວ່າດ້ວຍວຽກງານສາທາລະນະສຸກ, ກົດໝາຍວ່າດ້ວຍການຈັດຫາງານ, ກົດໝາຍວ່າດ້ວຍອາກອນທີ່ດິນ, ກົດໝາຍວ່າດ້ວຍເຍົາວະຊົນລາວ ແລະ ກົດໝາຍສະບັບປັບປຸງຈຳນວນ 6 ສະບັບຄື: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍສານທະຫານ ແລະ ເຜີຍແຜ່ເນື້ອໃນມະຕິກອງປະຊຸມຂອງສະພາປະຊາຊົນແຂວງໃຫ້ຮັບຮູ້ຕື່ມອີກ.

ຕອນທ້າຍ, ຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ສົນທະນາແລກປ່ຽນປະກອບຄຳຄິດຄຳເຫັນຂໍ້ຄົງຄ້າງ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດວຽກງານທີ່ພົວພັນເຖິງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ.

**(ວິນັດ)**

# ໜ່ວຍພັກຄະນະເລຂາທິການ ປະເມີນແຜນການກໍ່ສ້າງໜ່ວຍພັກປະຈຳປີ 2023



(ສພຊ) ໜ່ວຍພັກຄະນະເລຂາທິການສະພາປະຊາຊົນແຂວງສາລະວັນ ທີ່ຂຶ້ນກັບຄະນະພັກຮາກຖານສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ I ປະຈຳປີ 2023 ແລະ ທິດທາງແຜນການ ຄັ້ງທີ II ປະຈຳປີ 2024 ຂອງຕົນ ໂດຍການເປັນປະທານກອງປະຊຸມຂອງສະຫາຍ ສົມພອນ ແສງສຸລິຈັນ ເລຂາໜ່ວຍພັກຄະນະເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມໂອ້ລົມຂອງສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ; ເຂົ້າຮ່ວມມີສະຫາຍຕາງໜ້າຈາກໜ່ວຍພັກຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໜ່ວຍພັກຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ໜ່ວຍພັກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີບັນດາສະຫາຍສະມາຊິກພັກສົມບູນ-ສຳຮອງ ເຂົ້າຮ່ວມ.

ວາລະຂອງກອງປະຊຸມ ຜູ້ທີ່ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ຄຳແນະນຳຂອງຄະນະກວດກາພັກແຂວງ, ສະບັບເລກທີ 163/ກກພຂ.ສວ, ລົງວັນທີ 26 ກັນຍາ 2023 ແລະ ແຈ້ງການແນະນຳ ຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 60/ຄຈຂ.ສວ, ລົງວັນທີ 13 ຕຸລາ 2023; ຈາກນັ້ນ, ສະຫາຍ ຄົງສະໄໝ ວົງພັນ ຄະນະໜ່ວຍພັກເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານບົດສະຫຼຸບແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ I ປະຈຳປີ 2023 ແລະ ທິດທາງແຜນການ ຄັ້ງທີ II ປະຈຳປີ 2024; ຜ່ານການຈັດຕັ້ງປະຕິບັດຄຳສັ່ງ, ຄຳແນະນຳ, ບົດແນະນຳ ແລະ ການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນໄລຍະ 1 ປີຜ່ານມາ ສາມາດສະຫຼຸບຕີລາຄາຜົນສຳເລັດ, ດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ເປັນຕົ້ນແມ່ນດ້ານການເມືອງຄະນະໜ່ວຍພັກໄດ້ຊີ້ນຳ ແລະ ຍົກສູງຄວາມສາມາດນຳພາສະມາຊິກພັກຮູ້ຫັນເອົາແນວທາງຂອງພັກ, ກົດໝາຍຂອງລັດ ໄປຈັດຕັ້ງຜັນຂະຫຍາຍເປັນແຜນງານໂຄງການອັນລະອຽດແທດເໝາະກັບໜ້າທີ່ການເມືອງ ແລະ ເງື່ອນໄຂຕົວຈິງຂອງໜ່ວຍພັກ, ຕຳນິສົ່ງຂ່າວກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ ຮັບປະກັນໄດ້ຄວາມເປັນເອກະພາບສາມັກຄີພາຍໃນພັກ, ຄະນະໜ່ວຍພັກໄດ້ຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດຕາມ 5 ຫຼັກການ, 3 ທິດນຳໃນການກໍ່ສ້າງ ແລະ ປັບປຸງການຈັດຕັ້ງພັກໃຫ້ໜັກແໜ້ນ, ເຂັ້ມແຂງ, ຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບ, ຖືສຳຄັນ ແລະ ປະຕິບັດລະບອບດຳເນີນຊີວິດການເມືອງ, ປະຈຳເດືອນ, ປີ, ຢ່າງເປັນປົກກະຕິ, ເອົາໃຈໃສ່ຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ, ປະຕິບັດນະໂຍບາຍ ມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບ ແລະ ນິຕິກຳຕ່າງໆຢ່າງເຂັ້ມງວດ; ພ້ອມທັງໄດ້ຕີລາຄາການຈັດປະເພດສະມາຊິກພັກຕາມ 5 ເນື້ອໃນຄື: ດ້ານການເມືອງ, ດ້ານແນວຄິດ, ການຈັດຕັ້ງ, ແບບແຜນການນຳພາ ແລະ ດ້ານຄວາມຮັບຜິດຊອບໃນໜ້າທີ່ການເມືອງ ເຊິ່ງຜ່ານການປະເມີນການຈັດຕັ້ງປະຕິບັດໃນແຕ່ລະດ້ານສາມາດຈັດປະເພດສະມາຊິກພັກແຂງ ຈຳນວນ 16 ສະຫາຍ ຍິງ 8 ສະຫາຍ.

ໃນຕອນທ້າຍພິທີ, ກໍໄດ້ຮັບຟັງການໂອ້ລົມຊີ້ທິດເນືອງທາງໃຫ້ໜ່ວຍພັກ ແລະ ສະມາຊິກພັກຈາກສະຫາຍ ນາງ ສູນໄຖ ໄຊຍະແສງ ຕື່ມອີກ.

**(ດີລຳພົນ ພົມມະຈັນ)**

# ສະພາປະຊາຊົນແຂວງຫຼວງນ້ຳທາ ປະເມີນພະນັກງານ-ລັດຖະກອນ ປະຈຳປີ 2023



(ສພຊ) ເພື່ອຕີລາຄາຄືນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໃນຕອນເຊົ້າຂອງວັນທີ 26 ຕຸລາ 2023 ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານພະນັກງານ-ລັດຖະກອນ ປະຈຳປີ 2023 ຜູ້ທີ່ມີຕຳແໜ່ງປະເພດ 1-3 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ມີຫົວໜ້າ-ຮອງຫົວໜ້າຂະແໜງ ເຂົ້າຮ່ວມ 19 ທ່ານ.

ໂອກາດນີ້, ທ່ານ ກົງເພັດ ແກ້ວບົວພາ ໄດ້ມີຄຳເຫັນໃຫ້ທິດຊີ້ນຳ ໂດຍທ່ານໃຫ້ຮູ້ເຖິງຄວາມໝາຍ, ຄວາມສຳຄັນຂອງການປະເມີນປະຈຳປີ ເຊິ່ງເປັນຜົນງານໃນ 1 ປີຜ່ານມາ ແລະ ໃນການປະເມີນແມ່ນໃຫ້ປະເມີນກັນດ້ວຍຄວາມຈິງໃຈ, ຕຳນິສົ່ງຂ່າວຊ່ວຍເຫຼືອເຊິ່ງກັນແລະກັນ ເພື່ອປັບປຸງໃຫ້ດີຂຶ້ນ, ໃນການໃຫ້ຄະແນນປະເມີນຕ້ອງເບິ່ງຕາມຄວາມຈິງໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງຜູ້ກ່ຽວແທ້ ເພື່ອໃຫ້ມີຄວາມເປັນທຳ.

ພ້ອມດຽວກັນນັ້ນ, ພະນັກງານ-ລັດຖະກອນຜູ້ທີ່ມີຕຳແໜ່ງປະເພດ 1-3 ແຕ່ລະທ່ານ ໄດ້ຜັດປ່ຽນກັນຂຶ້ນຜ່ານໃບເກັບກ່ຽວຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໃນຮອບ 1 ປີຜ່ານມາ ແລະ ບັນດາທ່ານເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນຕຳນິສົ່ງຂ່າວເຊິ່ງກັນແລະກັນຢ່າງມີຈຸດສຸມ ເພື່ອຕີລາຄາດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ດ້ານຄວາມຮູ້ຄວາມສາມາດ ແລະ ປະສິບການ ແລະ ດ້ານຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ. ທັງນີ້, ກໍເພື່ອຕີລາຄາດ້ານດີ ແລະ ຂໍ້ຄົງຄ້າງ, ວິທີປັບປຸງ ແລະ ແກ້ໄຂ, ການໃຫ້ຄະແນນ ແລະ ຈັດປະເພດຕົນເອງ ທັງໄດ້ຕີລາຄາ ແລະ ໃຫ້ຄະແນນໝູ່ຄະນະເພື່ອນຮ່ວມງານ.

**(ວັນນີ ແຝງບົວວັນ)**

# ປະເມີນພະນັກງານ-ລັດຖະກອນ ແລະ ຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5




(ສພຊ) ໃນວັນທີ 25 ຕຸລາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມປະເມີນພະນັກງານ-ລັດຖະກອນ ປະຈຳປີ 2023 ແລະ ສະຫຼຸບຖອດຖອນບົດຮຽນໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຂຶ້ນ ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍມີຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ກໍເພື່ອເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນສະພາປະຊາຊົນແຂວງ ໃນການເຄື່ອນໄຫວວຽກງານ ໄລຍະ 1 ປີຜ່ານມາ. ໃນທີ່ປະຊຸມ ໄດ້ຜ່ານຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງສະບັບເລກທີ 111, ລົງວັນທີ 23 ຕຸລາ 2023 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະຮັບຜິດຊອບການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງ ປະຈຳປີ 2023.

ໂອກາດດັ່ງກ່າວ, ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ຫົວໜ້າຄະນະຮັບຜິດຊອບການປະເມີນພະນັກງານ-ລັດຖະກອນ ປະຈຳປີ 2023 ໄດ້ແນະນຳການປະເມີນ ໂດຍໄດ້ແບ່ງອອກເປັນ 4 ຈຸດ: ຄະນະເລຂາທິການ, ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ, ຄະນະກຳມະການຍຸດຕິທຳ ແລະ ປກຊ-ປກສ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

ການປະເມີນຄັ້ງນີ້, ໄດ້ປະເມີນຕາມມາດຖານຂອງການປະເມີນຄື: ດ້ານວຽກງານການເມືອງແນວຄິດ ແລະ ດ້ານຄຸນສົມບັດສິນທຳປະຕິວັດ, ດ້ານຄວາມຮູ້ຄວາມສາມາດ ແລະ ປະສົບການ ແລະ ດ້ານການປະເມີນຜົນສຳເລັດຂອງການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ທັງໄດ້ສະຫຼຸບຖອດຖອນບົດຮຽນໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ເປັນຕົ້ນແມ່ນວຽກງານກະກຽມເນື້ອໃນ, ວຽກງານບໍລິຫານ-ພິທີການ, ການພົວພັນປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນແຕ່ລະຄັ້ງໃຫ້ໄດ້ຮັບຜົນສຳເລັດດີຂຶ້ນເທື່ອລະກ້າວ.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນໂອ້ລົມຕໍ່ພະນັກງານສະພາປະຊາຊົນແຂວງ ຈົ່ງສືບຕໍ່ປະຕິບັດໜ້າທີ່ວຽກງານຂອງສະພາປະຊາຊາຊົນແຂວງ ໃຫ້ມີຜົນສຳເລັດດີຂຶ້ນ ແລະ ການໃຫ້ຄະແນນໃນການປະເມີນບໍ່ໃຫ້ມີແນວຄິດອະຄະຕິຕໍ່ຜູ້ຖືກປະເມີນ, ການປະເມີນຕ້ອງມີຄວາມໂປ່ງໃສ ສາມາດກວດສອບໄດ້.

**(ນາງ ສຸກສະຫວັນ ອິນທະແສງ)**

# ສະພາປະຊາຊົນແຂວງໄຊຍະບູລີ ເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ




(ສພຊ) ກອງປະຊຸມເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໄລຍະໃໝ່ ສະພາປະຊາຊົນແຂວງໄຊຍະບູລີ ໄດ້ຈັດຂຶ້ນໃນວັນທີ 26 ຕຸລາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນເຂົ້າຮ່ວມ.

ໃນພິທີ, ປະທານສະພາປະຊາຊົນແຂວງ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ. ຈາກນັ້ນ, ທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງ ໄດ້ຕີລາຄາຄືນສະພາບການຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໃນໄລຍະຜ່ານມາ ໂດຍຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້.

ສະພາປະຊາຊົນແຂວງໄຊຍະບູລີ ແມ່ນອົງການໜຶ່ງ ມີພາລະບົດບາດຕິດຕາມກວດກາການເຄົາລົບ ແລະ ການປະຕິບັດກົດໝາຍຂອງບັນດາອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ ເປັນເອກະພາບ ເຊິ່ງປະກອບມີ 3 ຄະນະກຳມະການ ແລະ 1 ເລຂາທິການ ຄື: ຄະນະກຳມະານເສດຖະກິດ, ແຜນການ ແລະ ການເງິນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະເລຂາທິການ, ປະກອບມີ 10 ຂະແໜງຊ່ວຍວຽກ, ມີພະນັກງານທັງໝົດ 54 ທ່ານ ຍິງ 18 ທ່ານ. ໂດຍປະຕິບັດຄຳສັ່ງແນະນຳຂອງຄະນະປະຈຳພັກແຂວງ ວ່າດ້ວຍການສ້າງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ສະບັບເລກທີ 001/ຄພຂ ຊຍ, ລົງວັນທີ 13 ມັງກອນ 2013 ສະພາປະຊາຊົນແຂວງ ໄດ້ຈັດຕັ້ງເຊື່ອມຊຶມບັນດານິຕິກຳຕ່າງໆທີ່ຕິດພັນກັບວຽກງານດັ່ງກ່າວໃຫ້ສະມາຊິກພັກພະນັກງານ-ລັດຖະກອນພາຍໃນອົງການຂອງຕົນ ພ້ອມແຕ່ງຕັ້ງຄະນະຮັບຜິດຊອບກະກຽມດຳເນີນກອງປະຊຸມກວດກາພັກ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ.

ຫຼັງຈາກນັ້ນ, ໄດ້ດຳເນີນກອງປະຊຸມການປະເມີນຂຶ້ນຜ່ານການປະເມີນຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ມີພະນັກງານ-ລັດຖະກອນເຂົ້າຮ່ວມແຂ່ງຂັນທັງໝົດ 54 ທ່ານ ຍິງ 18 ທ່ານ, ພາຍຫຼັງສຳເລັດດຳເນີນກອງປະຊຸມປະຖົມມະລຶກ ໄດ້ມີພະນັກງານ-ລັດຖະກອນຍົກຍ້າຍມາຮ່ວມແຂ່ງຂັນ 7 ທ່ານ ຍິງ 1 ທ່ານ. ພ້ອມດຽວກັນນີ້, ໃນແຕ່ລະປີກໍໄດ້ດຳເນີນກອງປະຊຸມການປະເມີນຂໍ້ແຂ່ງຂັນຂຶ້ນຢ່າງເປັນທາງການໃນການປະເມີນຂໍ້ແຂ່ງຂັນດັ່ງກ່າວໄດ້ມີພະນັກງານ-ລັດຖະກອນເຂົ້າຮ່ວມການປະເມີນ 61 ທ່ານ ຍິງ 19 ທ່ານ, ມີ 3 ຄະນະກຳມະການ, 1 ຄະນະເລຂາທິການ ແລະ ມີ 10 ຂະແໜງການ ເຊິ່ງໄດ້ຂຶ້ນຂໍ້ແຂ່ງຂັນໄວ້ ດັ່ງນີ້: ຂໍ້ແຂ່ງຂັນຂອງບຸກຄົນມີ 9 ຂໍ້; ຂໍ້ແຂ່ງຂັນຂອງຄະນະກຳມະການ ແລະ ຄະນະເລຂາທິການມີ 12 ຂໍ້, ຂະແໜງການມີ 11 ຂໍ້, ຂໍ້ແຂ່ງຂັນຂອງສະພາປະຊາຊົນແຂວງ ມີ 12 ຂໍ້ ແລະ ຂໍ້ແຂ່ງຂັນຂອງໜ່ວຍພັກ 12 ຂໍ້. ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດປະເມີນໄດ້ຮັບຫຼຽນໄຊແຮງງານຊັ້ນ I ຈຳນວນ 8 ທ່ານ, ຫຼຽນໄຊແຮງງານ II ຈຳນວນ 3 ທ່ານ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 6 ທ່ານ, ປະເພດຫຽນກາແຮງງານ ຈຳນວນ 6 ທ່ານ ແລະ ໄດ້ຮັບໃບຍ້ອງຍໍລັດຖະບານ ຈຳນວນ 11 ທ່ານ.

ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນໃນໄລຍະ 5 ປີຕໍ່ໜ້າ ສະພາປະຊາຊົນແຂວງ ສູ້ຊົນໃຫ້ບັນລຸຕາມຄາດໝາຍ ຍູ້ແຮງຂະບວນການຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ຢ່າງຕັ້ງໜ້າປຸກລະດົມຄະນະກຳມະການ, ຄະນະເລຂາທິການ ແລະ ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນ ຢ່າງກ້ວາງ, ແຂງແຮງ ໃຫ້ເປັນຂະບວນຟົດຟື້ນ, ຕໍ່ເນື່ອງຮັບປະກັນສູ້ຊົນໃຫ້ບັນລຸຕາມ 4 ຄາດໝາຍ ຄື: ໃຫ້ດີ, ໃຫ້ໄວ, ໃຫ້ຫຼາຍ ແລະ ໃຫ້ຖືກກົດໝາຍ.

**(ອິນທີ ຂຽວສີຟ້າ)**

# ກອງປະຊຸມວຽກງານ ຄະນະເລຂາທິການ ສະພາປະຊາຊົນແຂວງຄຳມ່ວນ ປະຈຳ 9 ເດືອນ



(ສພຊ) ໃນວັນທີ 27 ຕຸລາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄຳມ່ວນ ໄດ້ເປີດກອງປະຊຸມວຽກງານຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ປະຈຳ 9 ເດືອນ ແລະ ທິດທາງແຜນການປະຈຳ 3 ເດືອນທ້າຍປີ 2023 ໂດຍການເປັນປະທານຂອງທ່ານ ນາງ ອານົງໄຊ ສັງທອງເພັດ ຮອງເລຂາທິການສະພາປະຊາຊົນແຂວງຄຳມ່ວນ ທັງເປັນຜູ້ຊີ້ນຳວຽກງານດ້ານເນື້ອໃນ; ເຂົ້າຮ່ວມໂດຍທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ແມ່ນເພື່ອສະຫຼຸບຕີລາຄາຄືນຜົນງານ, ຈຸດດີ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ ປະຈຳ 9 ເດືອນ ແລະ ທິດທາງແຜນການ ປະຈຳ 3 ເດືອນທ້າຍປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II, ໃນການເຮັດທີ່ຕາມພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ປະຈຳ 9 ເດືອນ ແລະ ທິດທາງແຜນການປະຈຳ 3 ເດືອນທ້າຍປີ 2023; ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ວ່າດ້ວຍການພົບປະປະຊາຊົນຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 151/ຄປຈ.ສພຂ, ລົງວັນທີ 5 ກໍລະກົດ 2022 ແລະ ຮ່າງບົດບັນທຶກກອງປະຊຸມວຽກງານຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ປະຈຳ 9 ເດືອນ ແລະ ທິດທາງແຜນການປະຈຳ 3 ເດືອນທ້າຍປີ 2023. ພ້ອມນັ້ນ, ກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງຢ່າງມີບັນຍາກາດອັນຟົດຟື້ນ ແລະ ເປັນເຈົ້າການເຂົ້າໃສ່ເນື້ອໃນຄັ້ງນີ້ ໃຫ້ມີອັນຄົບຖ້ວນສົມບູນເລິກເຊິ່ງຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

ໃນຕອນທ້າຍກອງປະຊຸມ, ທ່ານ ບົວພັນ ແສງຈັນ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານທີ່ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຍາດໄດ້ຜົນງານອັນພົ້ນເດັ່ນມາຫຼາຍດ້ານໄລຍະທີ່ຜ່ານມາ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ບັນດາສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ຈົ່ງສືບຕໍ່ຮັກສາມູນເຊື້ອ ແລະ ເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຜົນສຳເລັດ ແລະ ມີປະສິດທິພາບສູງ.

**(ເອື້ອ ມະໂນສິງ)**

# ຜົນສຳເລັດກອງປະຊຸມໃຫຍ່ ສະຫະພັນແມ່ຍິງ ສະພາປະຊາຊົນແຂວງໄຊສົມບູນ



(ສພຊ) ສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງໄຊສົມບູນ ໄດ້ໄຂກອງປະຊຸມໃຫຍ່ຂຶ້ນທີ່ຫ້ອງປະຊຸມຂອງສານປະຊາຊົນແຂວງ ໃນວັນທີ 24 ຕຸລາ 2023 ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ເພັດສະໝອນ ໄຊສົມບຸນ ປະທານແມ່ຍິງໜ່ວຍ, ຫົວໜ້າຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໂດຍການເຂົ້າຮ່ວມຂອງສະຫາຍ ຄຳພູທອນ ວົງພະຈັນ ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງ, ສະຫາຍ ນາງ ຄຳສີ ສິດທິວໍລະດາ ກຳມະການພັກແຂວງ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງແຂວງ ແລະ ມີບັນດາປະທານແມ່ຍິງໜ່ວຍພາຍໃນອົງການຕຸລາການ ຕະຫຼອດຮອດສະມາຊິກແມ່ຍິງສົມບູນຂອງສະພາປະຊາຊົນແຂວງໄຊສົມບູນເຂົ້າຮ່ວມຢ່າງພ້ອມພຽງ.

ໃນທີ່ປະຊຸມ, ໄດ້ຮັບຟັງການຜ່ານມະຕິຕົກລົງອະນຸມັດເປີດກອງປະຊຸມຂອງເລຂາໜ່ວຍພັກ ຈາກສະຫາຍ ນາງ ຄູລ໋ ໄຟຈົງ ຮອງປະທານແມ່ຍິງໜ່ວຍ, ຮອງຂະແໜງບໍລິຫານການເງິນ ແລະ ສະຫາຍ ນາງ ເພັດສະໝອນ ໄຊສົມບຸນ ໄດ້ກ່າວເປີດກອງປະຊຸມ ພ້ອມທັງຜ່ານບົດລາຍງານການເມືອງທັງສອງພາກ ເຊິ່ງສະແດງໃຫ້ເຫັນຜົນງານຫຼາຍດ້ານທີ່ແມ່ຍິງໜ່ວຍສະພາປະຊາຊົນແຂວງມີຄວາມຫ້າວຫັນ, ສາມາດຍາດຜົນສຳເລັດທີ່ພົ້ນເດັ່ນອັນຫຼາກຫຼາຍ ແລະ ຍັງມີສະມາຊິກບາງຈຳນວນ ສາມາດສ້າງລາຍຮັບເຮັດດ້ວຍອາຊີບເສີມເຂົ້າສູ່ຄອບຄົວດ້ວຍການປູກພືດ, ລ້ຽງສັດນ້ອຍ-ສັດໃຫຍ່ ແລະ ມີທຸລະກິດເປັນຂອງຕົນເອງ ແລະ ອື່ນໆ; ຈາກນັ້ນ, ສະຫາຍ ນາງ ຄຳສີ ສິດທິວໍລະດາ ໄດ້ມອບໃບຍ້ອງຍໍ ຜົນງານ 5 ປີໃຫ້ແກ່ສະຫະພັນແມ່ຍິງສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກທັງໝົດພາຍໃນໜ່ວຍ.

ໂອກາດດັ່ງກ່າວ, ທີ່ປະຊຸມໄດ້ຮັບຟັງການຜ່ານບົດສໍາຫຼວດການນໍາພາລວມຂອງຄະນະໜ່ວຍຊຸດເກົ່າ ແລ້ວໄດ້ຮັບຟັງຂໍ້ຕົກລົງຂອງເລຂາໜ່ວຍພັກ ວ່າດ້ວຍການແຕ່ງຕັ້ງຄະນະຄວບຄຸມບັດ, ຜ່ານມາດຖານເງື່ອນໄຂ ແລະ ລາຍຊື່ບຸກຄະລາກອນຜູ້ສະໝັກເລືອກຕັ້ງຄະນະສະຫະພັນແມ່ຍິງໜ່ວຍຊຸດໃໝ່ ແລ້ວສະມາຊິກທຸກສະຫາຍໄດ້ດຳເນີນປ່ອນບັດ. ກອງປະຊຸມ ຄັ້ງປະຖົມມະລຶກຂອງສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງ ໄດ້ປ່ອນບັດເລືອກເອົາ 3 ສະຫາຍ ຄືດັ່ງນີ້: ສະຫາຍ ນາງ ເພັດສະໝອນ ໄຊສົມບຸນ ເປັນປະທານສະຫະພັນແມ່ຍິງໜ່ວຍ; ສະຫາຍ ນາງ ຄອນສະຫວັນ ຈັນທະອຸດອນ ເປັນຮອງປະທານສະຫະພັນແມ່ຍິງໜ່ວຍ ແລະ ສະຫາຍ ນາງ ສະພານຄຳ ແກ້ວວິໄລ ເປັນຮອງປະທານແມ່ຍິງ ພ້ອມທັງເປັນປະທານກວດກາ. ນອກນັ້ນ, ທີ່ປະຊຸມໄດ້ຮັບຟັງທິດຊີ້ນຳວຽກງານແມ່ຍິງ ເພື່ອສືບຕໍ່ປະຕິບັດພາລະກິດໃນຕໍ່ໜ້າ ຈາກສະຫາຍ ນາງ ຄຳສີ ສິດທິວໍລະດາ ແລະ ຮັບຟັງຄຳໂອ້ລົມຕໍ່ກອງປະຊຸມຂອງສະຫາຍ ຄຳພູທອນ ວົງພະຈັນ ໂດຍສະຫາຍໄດ້ຍ້ອງຍໍຊົມເຊີຍທັງຄະນະຊຸດເກົ່າ ແລະ ຊຸດໃໝ່ ຈົ່ງຮັກສາມູນເຊື້ອອັນດີງາມ, ສືບຕໍ່ຮັກແພງ, ຊ່ວຍເຫຼືອເຊິ່ງກັນແລະກັນ ພ້ອມທັງຮັດແໜ້ນຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ໃຫ້ເປັນແມ່ຍິງສາມດີຂອງສະພາປະຊາຊົນແຂວງໄຊສົມບູນ ສືບໆໄປ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ສົ່ງເສີມການຜະລິດກະສິກຳສະອາດ ແລະ ຫັດຖະກຳໄມ້ແກະສະລັກເມືອງສີໂຄດຕະບອງ

(ສພຊ) ເພື່ອເປັນການລົງຊຸກຍູ້ ແລະ ຕິດຕາມກວດກາວຽກງານຂົງເຂດບັນດາເຜົ່າຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນນະຄອນຫຼວງວຽງຈັນ, ໃນວັນທີ 24 ຕຸລາ 2023 ທ່ານ ນາງ ເກດມະນີ ບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ກຸ່ມຜະລິດກະສິກຳສະອາດ ແລະ ຫັດຖະກຳແກະສະຫຼັກ ຢູ່ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.



ໃນການຊຸກຍູ້ຄັ້ງນີ້, ໄດ້ຮັບຟັງການລາຍງານກ່ຽວກັບດອນໝາກໂມ ເຊິ່ງເປັນເກາະດອນແຫ່ງໜຶ່ງທີ່ນອນຢູ່ໃນບ້ານໃໝ່ ມີສາຍແມ່ນ້ຳຂອງໄຫຼຜ່ານເປັນສອງຄອນ ແລະ ເປັນເຂດທີ່ຕິດກັບຊາຍແດນ ລະຫວ່າງລາວ-ໄທ ທາງດ້ານທິດໃຕ້, ມີເນື້ອທີ່ທັງໝົດ 73 ເຮັກຕາ, ຄວາມຍາວ 3 ກິໂລແມັດ, ຄວາມກວ້າງ 700 ແມັດ, ມີຈຳນວນຕອນດິນ 119 ຕອນ, ປະຊາຊົນທີ່ທຳການຜະລິດປູກພືດຕົວຈິງ 48 ຄອບຄົວ, ມີເນື້ອທີ່ທຳການຜະລິດປູກພືດຜັກຕ່າງໆ 42,5 ເຮັກຕາ ເຊິ່ງໃນໄລຍະປີ 2012-2015 ເຂດດອນໝາກໂມໄດ້ທົດລອງເຮັດກະສິກຳສະອາດ (GAP) ດ້ວຍການນຳພາ-ຊີ້ນຳຂອງພາກສ່ວນກ່ຽວຂ້ອງ ໄດ້ຈັດຕັ້ງກຸ່ມຊາວສວນຂຶ້ນ ຈຳນວນ 28 ຄອບຄົວພ້ອມກັນຜະລິດກະສິກຳສະອາດສົ່ງອອກຕ່າງປະເທດ ເຊິ່ງຜົນຜະລິດສົ່ງອອກໄດ້ເຖິງ 120-150 ໂຕນຕໍ່ປີ ແລະ ປີ 2022 ພາກສ່ວນກ່ຽວຂ້ອງໄດ້ສືບຕໍ່ລົງຊຸກຍູ້ ແລະ ສົ່ງເສີມຄອບຄົວຊາວສວນທີ່ຜະລິດກະສິກຳສະອາດໃຫ້ເຂັ້ມແຂງ ເຊິ່ງການຜະລິດໄດ້ແບ່ງອອກເປັນ 2 ປະເພດ ຄື: ພືດໃຫ້ໝາກຫຼັກ ໄດ້ແກ່ໝາກເຂືອ, ໝາກຖົ່ວພູ ແລະ ໝາກເຜັດຊະນິດຕ່າງໆ; ປະເພດພືດຜັກສຳຮອງ ໄດ້ແກ່ໝາກຖົ່ວກາແອ, ໝາກຜັກໄຊ່ໃຫຍ່, ໝາກໂງ້ງວອ, ຖົ່ວຍາວ, ໝາກອຶ, ໝາກແຕງ, ໝາກບວບ, ຜັກກາດຊອມ. ນອກຈາກນັ້ນ, ຍັງໄດ້ປູກຕົ້ນໄມ້ກິນໝາກ ແລະ ໄມ້ຢືນຕົ້ນຈຳນວນໜຶ່ງ ເປັນຕົ້ນໝາກຫຸ່ງ, ໝາກກ້ວຍ, ໝາກກະທັນ, ໄຜ່ລ້ຽງນ້ອງ ແລະ ອື່ນໆ.



ພາຍຫຼັງຮັບຟັງການລາຍງານທາງຄະນະວຽກເຮັດຍັງໄດ້ມີຄຳເຫັນແລກປ່ຽນ ແລະ ຮັບຟັງການສະເໜີຂອງຊາວກະສິກອນ ໃນນັ້ນ, ແມ່ນຕິດພັນກັບໄຟຟ້າ ເຊິ່ງຊາວສວນໄດ້ສະເໜີໃຫ້ຂັ້ນເທິງຄົ້ນຄວ້າວາງຕາຄ່າຍໄຟຟ້າໃຫ້ທົ່ວເຖິງພື້ນທີ່ທຳການຜະລິດ ແລະ ສະເໜີໃຫ້ສະຫງວນພື້ນທີ່ເຫຼົ່ານີ້ໄວ້ ເພື່ອໃຫ້ປະຊາຊົນ ໄດ້ທຳການຜະລິດປູກພືດຕໍ່ໄປ (ບໍ່ໃຫ້ມີການສຳປະທານ).

ຕອນບ່າຍວັນດຽວກັນ, ຄະນະລົງເຮັດວຽກ ໄດ້ສືບຕໍ່ລົງຢ້ຽມຢາມໂຮງຮຽນຫັດຖະກຳແກະສະຫຼັກ ລາວດີຊາຍ ທີ່ບ້ານຫ້ວຍຫ້ອມ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

# ສພຂ ຫົວພັນ ສຳເລັດການປະເມີນພະນັກງານ-ລັດຖະກອນ ປະຈຳປີ 2023

(ສພຊ) ສະພາປະຊາຊົນແຂວງຫົວພັນ ໄດ້ສຳເລັດກອງປະຊຸມປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ປະຈຳປີ 2023 ໃນວັນທີ 25 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານສະພາປະຊາຊົນແຂວງ; ມີຄະນະປະຈຳ, ຄະນະເລຂາທິການ, ຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ, ອົງການກວດກາລັດແຂວງ, ພະແນກພາຍໃນແຂວງ ຕະຫຼອດຮອດພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.



ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງບົດສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ ພ້ອມທັງເຊື່ອມຊຶມເອກະສານສຳຄັນ ເປັນຕົ້ນແມ່ນຄູ່ມືແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ຄູ່ມືແນະນຳການຈັດຕັ້ງການປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ.

ໃນພິທີ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໄດ້. ຈາກນັ້ນ, ພະນັກງານ-ລັດຖະກອນໄດ້ພ້ອມກັນປະເມີນຕົນເອງ ແລະ ເພື່ອນຮ່ວມງານຕາມມາດຖານເງື່ອນໄຂຂອງການປະເມີນ ເພື່ອເປັນການສັງເກດຕີລາຄາຄືນດ້ານດີຜົນງານ, ດ້ານອ່ອນຄົງຄ້າງຂອງແຕ່ລະຄົນ ພ້ອມທັງປະກອບຄຳຄິດຄຳເຫັນ, ຕຳນິສົ່ງຂ່າວ, ກໍ່ສ້າງເຊິ່ງກັນແລະກັນ.

ສະພາປະຊາຊົນແຂວງຫົວພັນ ມີພະນັກງານ-ລັດຖະກອນທັງໝົດ 51 ຄົນ ຍິງ 19 ຄົນ ໃນນີ້, ມີໜ້າປະເມີນຕົວຈິງ 40 ຄົນ ຍິງ 17 ຄົນ ຜ່ານການປະເມີນ ມີປະເພດດີເລີດ ແລະ ດີ, ປະເພດກາງ ແລະ ອ່ອນບໍ່ມີ.

ຕອນທ້າຍ, ປະທານກອງປະຊຸມ ໄດ້ມີຄຳຄິດຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວວຽກງານໄລຍະໜຶ່ງປີຜ່ານມາຂອງພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງຍາດມາໄດ້ ແລະ ເໜັ້ນໜັກໃຫ້ບັນດາທ່ານ ຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຈົ່ງຖືເອົາວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເອງເປັນກົກ ທັງເປັນປົກກະຕິຕໍ່ເນື່ອງ ແລະ ຮຽກຮ້ອງໃຫ້ພະນັກງານເອົາໃຈໃສ່ຄົ້ນຄວ້າຮໍ່າຮຽນ, ເຊື່ອມຊຶມແນວທາງຂອງພັກ-ລັດ, ຮູ້ຈຳແນກມິດ ແລະ ສັດຕູຢ່າງຈະແຈ້ງ, ມີຄວາມອຸ່ນອຽນທຸ່ນທ່ຽງ, ປຸ້ມລຸມສາມັກຄີ ເປັນເອກະພາບກັນພາຍໃນ, ຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ ສືບຕໍ່ເຝິກຝົນຫຼໍ່ຫຼອມທາງດ້ານຄຸນສົມບັດ, ສິນທຳປະຕິວັດ, ຕັ້ງຫນ້າປະຕິບັດແບບແຜນວິທີການເຮັດວຽກ ປະຕິບັດຫນ້າທີ່ວຽກງານຂອງຕົນໃຫ້ປະສົບຜົນສຳເລັດ ແລະ ພ້ອມກັນຕິຖອຍບັນຫາຈຸດອ່ອນຂໍ້ຄົງຄ້າງໃຫ້ໝົດໄປເທື່ອລະກ້າວ.

**(ນັກຂ່າວ ສພຂ ຫົວພັນ)**






# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

9. ທົບທວນການປະຕິບັດງານດ້ານຄວາມປອດໄພຂອງເຂື່ອນ ແລະ ແຜນຮັບມືສຸກເສີນ ຢ່າງເປັນປົກກະຕິ ເພື່ອໃຫ້ແຜນດັ່ງກ່າວສອດຄ່ອງກັບຫຼັກວິທະຍາສາດ ແລະ ຄວາມກ້າວໜ້າດ້ານເຕັກໂນໂລຊີ, ຮັບປະ ກັນຄວາມປອດໄພ;

10. ລາຍງານ ແລະ ສະໜອງຂໍ້ມູນ ຂ່າວສານ ດ້ານຄວາມປອດໄພຂອງເຂື່ອນ ຕາມກຳນົດເວລາ ໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ;

11. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທີ່ຮັບຜິດຊອບກ່ຽວກັບຄວາມປອດໄພຂອງເຂື່ອນ, ການຝຶກອົບຮົມ, ການເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບຄວາມສ່ຽງຂອງເຂື່ອນ;

12. ຖືກິດຈະກຳຄວາມປອດໄພຂອງເຂື່ອນ ເປັນບຸລິມະສິດທຳອິດ ແລະ ເອົາໃຈໃສ່ຄວບຄຸມຢ່າງເຄັ່ງຄັດ ໂດຍສະເພາະເຂື່ອນທີ່ມີຄວາມສ່ຽງສູງ ແລະ ຄວາມສ່ຽງຮ້າຍແຮງ;

13. ອອກແບບ ແລະ ກໍ່ສ້າງຫົນທາງເຂົ້າຫາພື້ນທີ່ຂອງເຂື່ອນ ແລະ ໂຕເຂື່ອນ ໃຫ້ສາມາດນຳໃຊ້ໄດ້ໃນທຸກກໍລະນີ, ທຸກສະພາວະເງື່ອນໄຂ ແລະ ລະດູການ ທັງໃນກໍລະນີປົກກະຕິ ແລະ ເກີດເຫດສຸກເສີນ;

14. ປະຕິບັດຕາມ ຄຳສັ່ງ, ແຈ້ງການ, ຄຳແນະນຳ ຂອງລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບມາດຕະການຄວາມປອດໄພຂອງເຂື່ອນຢ່າງເຂັ້ມງວດ;

15. ຕິດຕາມ, ກວດສອບ ແລະ ກວດກາ ການປະເມີນຜົນຄວາມປອດໄພຂອງເຂື່ອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

16. ຮັບຜິດຊອບຄ່າໃຊ້ຈ່າຍສຳລັບການຄຸ້ມຄອງ, ການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ;

17. ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນໃນກໍລະນີການກໍ່ສ້າງ, ການດຳເນີນງານຂອງເຂື່ອນ ແລະ ການບຳລຸງຮັກສາເຂື່ອນ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຊີວິດ, ຊັບສິນ ແລະ ສຸຂະພາບຂອງຜູ້ອື່ນ ແລະ ສິ່ງແວດລ້ອມ;

18. ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການວ່າຈ້າງວິສະວະກອນ ຫຼື ບໍລິສັດທີ່ປຶກສາເອກະລາດ ເພື່ອເຮັດວຽກດ້ານວິຊາການໃຫ້ລັດຖະບານ ກ່ຽວກັບການກວດກາ ການອອກແບບ ແລະ ການກໍ່ສ້າງເຂື່ອນ ໃຫ້ມີຄຸນນະພາບ ແລະ ຄວາມປອດໄພ;

19. ສ້າງ, ພັດທະນາຊັບພະຍາກອນມະນຸດ, ບຸກຄະລະກອນໃຫ້ເປັນມືອາຊີບ ແລະ ຊຳນານງານ;

20. ສະຫຼຸບ, ລາຍງານກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ, ການບຳລຸງຮັກສາ ແລະ ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພຂອງເຂື່ອນ ໃຫ້ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

21. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ຂອງຜູ້ໄດ້ຮັບຜົນກະທົບ**

ຜູ້ທີ່ໄດ້ຮັບຜົນກະທົບ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຕາມກົດໝາຍ;

2. ໄດ້ຮັບຄວາມປອດໄພຕໍ່ ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ ໃນການກໍ່ສ້າງ, ການດຳ ເນີນງານຂອງເຂື່ອນ ແລະ ການບຳລຸງຮັກສາເຂື່ອນ;

3. ສະເໜີ, ຮ້ອງຟ້ອງ ໃນກໍລະນີເຫັນວ່າ ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ, ການບຳລຸງຮັກສາເຂື່ອນ ແລະ ອ່າງເກັບນ້ຳ ມີຄວາມຜິດພາດໃດໜຶ່ງ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບ, ຊັບສິນ ແລະ ສິ່ງ ແວດລ້ອມ;

4. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ຈຳເປັນ ທີ່ພົວພັນກັບຄວາມປອດໄພຕໍ່ ຊີວິດ, ຊັບສິນ, ສັງຄົມ ແລະ ສິ່ງແວດລ້ອມ ໃນໄລຍະກໍ່ສ້າງ, ກັກເກັບນ້ຳ, ດຳເນີນງານ ແລະ ບຳລຸງຮັກສາເຂື່ອນ;

5. ໄດ້ຮັບການແຈ້ງເຕືອນກ່ຽວກັບຄວາມປອດໄພລ່ວງໜ້າຢ່າງຄົບຖ້ວນ, ທັນການ ຈາກຜູ້ພັດທະນາເຂື່ອນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີມີໄພອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງເຂື່ອນໃນໄລຍະການກໍ່ສ້າງ, ການດຳເນີນງານ, ການບຳລຸງຮັກສາ, ການກັກເກັບນ້ຳ ແລະ ການປ່ອຍນ້ຳອອກຈາກອ່າງເກັບນ້ຳ;

6. ໄດ້ຮັບການແນະນຳ, ການຝຶກຊ້ອມ ຈາກຜູ້ພັດທະນາເຂື່ອນຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນແຜນການຮັບມືສຸກເສີນຂອງເຂື່ອນ;

7. ໄດ້ຮັບການຊ່ວຍເຫຼືອຈາກຜູ້ພັດທະນາເຂື່ອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຍົກຍ້າຍຢ່າງທັນການ ແລະ ປອດໄພ ເມື່ອມີເຫດການຜິດປົກກະຕິ, ການດຳເນີນງານຂອງເຂື່ອນຜິດພາດ, ເກີດນ້ຳນອງ, ແຜ່ນດິນໄຫວ ຫຼື ເຂື່ອນແຕກພັງ;

8. ໄດ້ຮັບການຊົດເຊີຍຄ່າເສຍຫາຍຕໍ່ຊີວິດ, ສຸຂະພາບ ແລະ ຊັບສິນທີ່ເກີດຈາກການກໍ່ສ້າງ, ການດຳເນີນງານ ແລະ ບຳລຸງຮັກສາເຂື່ອນຢ່າງຄົບຖ້ວນ ແລະ ທັນເວລາ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ພັນທະຂອງຜູ້ໄດ້ຮັບຜົນກະທົບ**

ຜູ້ໄດ້ຮັບຜົນກະທົບ ມີພັນທະ ດັ່ງນີ້:

1. ປະກອບສ່ວນໃນການປົກປັກຮັກສາເຂື່ອນໃຫ້ມີຄວາມປອດໄພ;

2. ແຈ້ງຂໍ້ມູນໃຫ້ຜູ້ພັດທະນາເຂື່ອນ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງຢ່າງທັນການ ໃນກໍລະນີເຫັນວ່າເຂື່ອນມີຄວາມຜິດປົກກະຕິ;

3. ປະກອບສ່ວນໃນການປົກປັກຮັກສາປ່າໄມ້ເຂດອ່າງຮັບນ້ຳ ແລະ ລຸ່ມເຂື່ອນ;

4. ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນບໍລິເວນເຂື່ອນ;

5. ອຳນວຍຄວາມສະດວກ, ເຂົ້າຮ່ວມການຝຶກອົບຮົມ, ການຝຶກຊ້ອມ ແລະ ການປະຕິບັດແຜນຮັບມືສຸກເສີນ;

6. ປະຕິບັດລະບຽບການ, ມາດຕະການຄວາມປອດໄພຂອງເຂື່ອນ, ແຈ້ງການ, ຄຳແນະນຳ, ຂໍ້ມູນຂ່າວສານ ທີ່ຜູ້ພັດທະນາເຂື່ອນ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ສະໜອງ ຫຼື ວາງອອກ ໃນແຕ່ລະໄລຍະ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 57 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ບຸກລຸກ, ທຳລາຍປ່າໄມ້ ເປັນຕົ້ນ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຍອດນ້ຳ ຊຶ່ງເຮັດໃຫ້ເຂື່ອນບໍ່ມີຄວາມປອດໄພ;

2. ບຸກລຸກສະຖານທີ່, ລັກ, ທຳລາຍອຸປະກອນ ແລະ ສິ່ງປະກອບສ້າງຂອງເຂື່ອນ;

3. ປຸກສ້າງ, ຕັ້ງຖິ່ນຖານ, ທຳການຜະລິດ ຫຼື ທຳມາຫາກິນ ຢູ່ໃກ້ບໍລິເວນ ຫຼື ເຂດຫວງຫ້າມ ຂອງໂຄງການໂດຍບໍ່ໄດ້ຮັບອະນຸຍາດ;

4. ນຳໃຊ້ ຫຼື ແຈ້ງ ຂໍ້ມູນທີ່ບໍ່ມີມູນຄວາມຈິງກ່ຽວກັບຄວາມປອດໄພຂອງເຂື່ອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 58 ຂໍ້ຫ້າມສຳລັບຜູ້ພັດທະນາເຂື່ອນ**

ຫ້າມຜູ້ພັດທະນາເຂື່ອນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດຳເນີນການກໍ່ສ້າງ ແລະ ການປັບປຸງຮາກຖານເຂື່ອນໃນກໍລະນີບໍ່ຜ່ານການກວດກາ ແລະ ບໍ່ໄດ້ຮັບໃບຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

3. ກັກເກັບນ້ຳ ຫຼື ປ່ອຍນ້ຳ ທີ່ບໍ່ຢູ່ໃນແຜນຜະລິດ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ແລະ ບໍ່ໄດ້ແຈ້ງເຕືອນລ່ວງໜ້າ;

4. ກໍ່ສ້າງເຂື່ອນ ແລະ ຕິດຕັ້ງອຸປະກອນ, ສ່ວນປະກອບຂອງເຂື່ອນ ທີ່ບໍ່ໄດ້ຄຸນນະພາບ ແລະ ມາດຕະຖານ;

5. ນຳໃຊ້ ຫຼື ແຈ້ງຂໍ້ມູນກ່ຽວກັບການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການກັກເກັບນ້ຳ ແລະ ການດຳເນີນງານຂອງເຂື່ອນ ທີ່ບໍ່ຖືກຕ້ອງ ແລະ ບໍ່ມີຄວາມປອດໄພ;

6. ຂາດຄວາມຮັບຜິດຊອບໃນການຕິດຕາມ, ການກວດສອບ ແລະ ການກວດກາ ຄວາມປອດໄພຂອງເຂື່ອນ;

7. ດຳເນີນງານຂອງເຂື່ອນທີ່ຜິດພາດ ຊຶ່ງພາໃຫ້ເກີດຄວາມເສຍຫາຍຕໍ່ ຊີວິດ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ;

8. ຊື້ຈ້າງ, ໃຫ້ສິນບົນ ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະ ສົມຮູ້ຮ່ວມຄິດກັບປະຊາຊົນ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ດ້ວຍຄວາມເລີ່ນເລີ້, ປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ຜູ້ພັດທະນາເຂື່ອນ ລວມທັງບໍລິສັດຮັບເໝົາກໍ່ສ້າງທີ່ກ່ຽວຂ້ອງ;

3. ປອມແປງເອກະສານ ແລະ ອອກເອກະສານບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຊຶ່ງເຮັດໃຫ້ການພັດທະນາເຂື່ອນບໍ່ມີຄວາມປອດໄພ ລວມທັງການທຳລາຍເອກະສານກ່ຽວກັບຄວາມປອດໄພຂອງເຂື່ອນ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ໝູ່ເພື່ອນ;

5. ປະຕິບັດໜ້າທີ່ເກີນຂອບເຂດ, ສົມຮູ້ຮ່ວມຄິດກັບຜູ້ພັດທະນາເຂື່ອນ ກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ການບຳລຸງຮັກສາ ຊຶ່ງກໍ່ຄວາມເສຍຫາຍ ແລະ ເຮັດໃຫ້ເຂື່ອນບໍ່ມີຄວາມປອດໄພ;

6. ດຳເນີນກິດຈະການ ຫຼື ເຂົ້າຮ່ວມ ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານເຂື່ອນ ທີ່ພົວພັນກັບວຽກງານທີ່ຕົນຮັບຜິດຊອບ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ ວຽກງານຄວາມປອດໄພຂອງເຂື່ອນ
## ໝວດທີ 1
## ການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ

**ມາດຕາ 60 ອົງການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອ່ານຕໍ່ສະບັບໜ້າ




# ການເພິ່ງຕົນເອງ ຄືທີ່ເພິ່ງອັນຖາວອນ ແລະໝັ້ນຄົງ

# ດັ້ນກົບເມກ



ທ້າຍທີ່ສຸດຂອງພັດທະນາ ກໍຕ້ອງຫັນມາເພິ່ງຕົນເອງ ຖ້າທຽບໃສ່ຄົນໜຶ່ງໃນການສ້າງຊີວິດ ຈຸດເລີ່ມຕົ້ນກໍອາດໄດ້ເພິ່ງອາໄສພີ່ນ້ອງ ຫຼື ຄົນຮູ້ຈັກອ້ອມຂ້າງ ເພື່ອຊ່ວຍຊີ້ທິດ ຊ່ວຍວັດຖຸ ດັ່ງນັ້ນ, ລັກສະນະສິ່ງຂອງທີ່ຈະເພິ່ງອີງອາໄສຈາກຄົນອື່ນ ມີທັງປັນຍາ ແລະ ວັດຖຸ ຖ້າເຮົາເອື່ອຍອີງເພິ່ງວັດຖຸນຳຄົນອື່ນກໍສະບາຍ ຊິນໃຊ້ ເຄີຍຊິນ ຂໍຢູ່ຕະຫຼອດເວລາ ແຕ່ຖ້າເພິ່ງທາງປັນຍາຈະເຮັດໃຫ້ເຂັ້ມແຂງ ໝັ້ນຄົງກວ່າ.

ສອງເສັ້ນທາງທີ່ເພິ່ງອີງອາໄສຍາດພີ່ນ້ອງ-ຄົນຊ່ອຍເຫຼືອ ເຮົາຈະເລືອກສິ່ງໃດຫຼາຍກວ່າກັນ, ພະພຸດທະເຈົ້າສອນໄວ້ແຈ້ງແລ້ວວ່າ: ອັດຕາຫິ ອັດຕະໂນນາໂຖ... ຕົນແລເປັນທີ່ເພິ່ງຂອງຕົນ. ໝາຍຄວາມວ່າໃນຖານະທີ່ເປັນມະນຸດ ມີສະຕິປັນຍາ ຈະອາໄສພໍ່ແມ່ຍາດພີ່ນ້ອງ ກໍເພິ່ງໄດ້ຊົ່ວຄາວ ເພິ່ງໄດ້ເປັນບາງຄັ້ງ ແຕ່ທີ່ເພິ່ງອັນປະເສີດຖາວອນໝັ້ນຄົງ ຄືຕ້ອງສ້າງຕົນເອງໃຫ້ເຂັ້ມແຂງເປັນທີ່ເພິ່ງອັນປະເສີດ ເຮົາລອງມາວິເຄາະສອງລັກສະນະຊີວິດຄົນ; ຄົນໜຶ່ງເຄີຍຊິນກັບການຂໍການຊ່ວຍເຫຼືອຈາກພໍ່ແມ່ພີ່ນ້ອງຈົນຂີ້ຄ້ານ ບໍ່ຄິດອ່ານ ລົງມືສ້າງໂຕ ພໍໄດ້ເງິນຊັບສິນມາກໍໃຊ້ຈ່າຍ ກິນລ້ຽງປາກທ້ອງຈົນໝົດ; ອີກຄົນໜຶ່ງ ຂໍເພິ່ງພຽງບາງອັນຈຳເປັນ ແຕ່ມຸ່ງຮຽນຮູ້ສຶກສາອາດຊ້າແດ່ ຍາກແດ່ ແຕ່ກໍເປັນທາງອັນປະເສີດຈະເລີນທາງປັນຍາຄວາມຮູ້, ຮູ້ຈັກສ້າງໂຕເອງ, ຮູ້ຈັກແກ້ໄຂບັນຫາຊີວິດຕົນເອງ ຮູ້ຈັກຕັ້ງຊີວິດ-ສ້າງຄອບຄົວ ຕັ້ງໂຕໄດ້ ຈົນກ້າວໄປສູ່ຄວາມໝັ້ນຄົງແກ່ອະນາຄົດ ເພາະຮູ້ຈັກສ້າງວຽກ, ພັດທະນາວຽກງານ, ຮູ້ຈັກຜະລິດອາຫານ, ຮູ້ຈັກປູກຝັງລົງດິນໄວ້ກິນ ບໍ່ເພິ່ງພາການຊື້ຫລາຍ ແຕ່ເພິ່ງການສ້າງເອົາເອງ.

ສັງລວມເບິ່ງ ສອງລັກສະນະຊີວິດອັນໃດຈະດີກ່ວາກັນ, ພໍ່ແມ່ຜູ້ປົກຄອງ ຈະໃຊ້ວິທີສອນລູກແບບໃດກໍເລືອກຕາມໃຈ ເຊິ່ງບໍ່ຕ່າງກັບຊາດໃດໜຶ່ງ ຈະພັດທະນາໃຫ້ເຂັ້ມແຂງ ເຮົາຈະສ້າງພັດທະນາແບບໃດ? ຖ້າມຸ່ງແຕ່ຄ່ານິຍົມ ຕິແຕ່ໜອກ ແຕ່ບໍ່ປັບຕັດຜົມໃຫ້ເຂົ້າກັບໜອກນັ້ນຍາກ; ເຂັ້ມແຂງສ້າງຕົນເອງ ມີເງິນຄຳ ລຸງປ້າຈຶ່ງວ່າຫລານ.

# ພາສາກັບຄວາມເປັນຈິງ

ໂດຍ: Sengfa Hola

ຖ້າຫາກວ່າພາສາ ແລະ ຄວາມເປັນຈິງແມ່ນອັນດຽວກັນ ແນ່ນອນມະນຸດທຸກຮູບທຸກນາມບົນໜ້າໂລກນີ້ ຄົງບໍ່ຕ້ອງວຸ່ນວາຍເສຍເວລາໄປຮຽນພາສາຕ່າງປະເທດດອກ ເພາະເວລານັ້ນຄົນເຮົາຈະມີພຽງພາສາດຽວ.

ເວົ້າອີກແບບໜຶ່ງກໍຄືແຕ່ລະພາສາ ມີມະໂນພາບອັນດຽວ ແຕ່ຄຳສັບທີ່ເປັນຕົວແທນໃຫ້ແກ່ມະໂນພາບນັ້ນແຕກຕ່າງກັນ ເຊັ່ນຄຳວ່າ “ຄວາມຮັກ” ໃນພາສາລາວ ເຊິ່ງສາມາດສະແດງມະໂນພາບແບບນາມທຳໄດ້ສຳລັບຄົນລາວ, ສ່ວນຄົນຊາດອື່ນທີ່ບໍ່ເຄີຍຮຽນພາສາລາວກໍຈະບໍ່ສາມາດເຂົ້າໃຈຄຳສັບນີ້ໄດ້ ຍົກເວັ້ນແຕ່ວ່າ ຄຳສັບນີ້ໄດ້ແປໄປເປັນພາສາແມ່ຂອງຄົນຜູ້ນັ້ນສາກ່ອນ ເຊັ່ນຖ້າຄົນຜູ້ນັ້ນເປັນຄົນຝຣັ່ງ ຫາກເຮົາແປຈາກຄວາມຮັກເປັນ amour ຫຼືຄົນຜູ້ນັ້ນເປັນຄົນອັງກິດ ແປເປັນ love ເຂົາເຈົ້າກໍຈະສາມາດເຂົ້າໃຈໄດ້.

ສະແດງວ່າ ຄວາມເປັນຈິງ ຫຼືສັດຈະທຳຂອງໂລກເຮົານີ້ແມ່ນອັນດຽວກັນ ບໍ່ວ່າຊາດໃດ ຊົນເຜົ່າໃດ ກໍຈະມີມະໂນພາບ ຫຼືການເຫັນປາກົດການທຳມະຊາດ ຫຼືຄວາມເປັນຈິງອັນດຽວກັນ. ສ່ວນວ່າພາສານັ້ນແມ່ນຕ່າງກັນໄປໃນແຕ່ລະສັງຄົມ.

ສ່ວນຄວາມຮູ້ທາງດ້ານວິຊາການ ແລະ ຫຼັກມູນທິດສະດີຕ່າງໆ ຕະຫຼອດຮອດຄຳສັ່ງສອນຂອງແຕ່ລະສາສະໜານັ້ນ ກໍຖືກບັນທຶກໄວ້ດ້ວຍພາສາ, ຖ້າເປັນວິທະຍາການ ຫຼືສາສະໜາຂອງຝ່າຍຕາເວັນຕົກ ກໍຈະຖືກບັນທຶກດ້ວຍພາສາເກຣັກ-ພາສາລາແຕັງ... ສ່ວນວິທະຍາການ ຫຼືສາສະໜາຂອງຝ່າຍຕາເວັນອອກກໍຈະຖືກບັນທຶກດ້ວຍພາສາປາລີ-ສັນສະກິດ ຫຼືຈີນ...

ເພື່ອຈະເຂົ້າເຖິງສັດຈະທຳດັ່ງກ່າວ ພວກເຮົາກໍຕ້ອງໄດ້ຮ່ຳຮຽນພາສາເຫຼົ່ານີ້. ມາຮອດສະໄໝປັດຈຸບັນບາງທີອາດຈະບໍ່ຈຳເປັນຕ້ອງຮຽນກໍໄດ້ ເພາະມີການແປມາເປັນພາສາຝຣັ່ງ-ອັງກິດ-ໄທ ຕະຫຼອດຮອດພາສາລາວແລ້ວ. ແຕ່ເພື່ອໃຫ້ເລິກເຊິ່ງແທ້ໆ ກໍຄວນສຶກສາຄົ້ນຄວ້າໃນພາສາດັ້ງເດີມເຫັນຈະຊັດເຈນກວ່າ.






# ຮຽນຄຳລາວໃຫ້ຖືກ

#ຄູແສງ

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ໄກ່ເຂ່ຍ | ໂສ້ງເຄ່ຍ |
| ສັກຢາ | ຊັກເຄື່ອງ |
| ສັດຊື່ | ຊັດເຈນ |
| ໂຫລະສັບ | ກະດາດຊັບ |
| ບາງພ່ອງ, ບົກພ່ອງ | ຜຸດຜ່ອງ, ຂາວຜ່ອງ |
| ແຜ່ເຊື້ອ, ແຜ່ລູກ | ຕີແຜ່, ແຜ່ປັດໄຈ |
| ຜ່າຝືນ | ຫາຟືນ |
| ມີເງິນໜ້ອຍ | ບໍ່ມີເງິນໃບນ້ອຍ |
| ຫຼັກແຫຼມ | ລັກຂ້າມຂອງ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ວິທີແກ້ໄຂ**

ຕ້ອງຊີ້ແຈງໃຫ້ເຂົາເຂົ້າໃຈວ່າ ການຮ່ວມສຸກຮ່ວມທຸກກັນ ແມ່ນເປັນການດີແທ້, ເປັນຕົ້ນໃນເວລາອັນໃດກໍຍັງຂາດເຂີນ, ສະມາຊິກຂອງພັກ ແລະ ພະນັກງານແຕ່ລະຄົນ ຕ້ອງເປັນແບບຢ່າງໃນການອົດທຸກທົນຍາກ ແລະ ປະຢັດ, ແຕ່ກໍຕ້ອງເບິ່ງຕາມສະພາບການ, ສິ່ງໃດຕາຍຕົວໂພດບໍ່ຖືກ, ຍົກຕົວຢ່າງ ຄື ເມື່ອນັກຮົບຜູ້ໜຶ່ງຖືກບາດເຈັບໄດ້ຂີ້ລົດ ແລະ ກິນແຊບກວ່ານັກຮົບໝົດທຸກຄົນກໍຢາກທວງຂີ້ລົດ ແລະ ກິນແຊບຄືກັນ ຫຼື ວ່າເມື່ອເວົ້າເຖິງສະພາບກໍຍັງບັງຄັບໃຫ້ເດັກນ້ອຍກິນຫຼາຍທໍ່ຜູ້ໃຫຍ່ ແລະ ຫາບໜັກທໍ່ຜູ້ໃຫຍ່, ຖືວ່າເຮັດແນວນັ້ນຈຶ່ງແມ່ນສະເໝີພາບກໍບໍ່ຖືກ, ເພາະມັນເປັນການສະເໝີພາບແບບບໍ່ມີຜົນດີ. ພວກເຮົາຕ້ອງເດັດດ່ຽວຕ້ານຢັນຄວາມສະເໝີພາບແບບນັ້ນໃຫ້ໄດ້.

ບາງຄົນຢ້ານເສຍກຽດຂອງຕົນເອງ ເລີຍບໍ່ກ້າຕຳໜິຕົນເອງ, ອ້າງວ່າການຕຳໜິຂໍ້ບົກພ່ອງຂອງຕົນເອງ, ຂອງເພື່ອນສະຫາຍຂອງຕົນ ຂອງພັກ ຫຼື ຂອງລັດຖະບານຂອງຕົນນັ້ນຢ້ານສັດຕູຈະເອົາອັນນັ້ນມາໂຈມຕີເຮົາຄືນ, ເວົ້າແນວນັ້ນແມ່ນຜິດໃຫຍ່. ຂໍ້ບົກພ່ອງກໍຄືກັບພະຍາດຊະນິດໜຶ່ງ, ການຕຳໜິ ກໍຄືກິນຮາກຢາ ຢ້ານຄວາມຕຳໜິ ກໍຄືກັນກັບວ່າມີພະຍາດແລ້ວເຊື່ອງອຳໄວ້ບໍ່ກ້າກິນຢາ ເຫິງໄປ ພະຍາດແຮ່ງໜັກ ທ້າຍສຸດ ບໍ່ຕາຍກໍເສຍອົງຄະ.

ເວົ້າສະເພາະ ແຕ່ລະຄົນ ການຈົ່ງຈຽມບໍ່ກ້າຕຳໜິ ປ່ອຍໃຫ້ເພື່ອນສະຫາຍຂອງຕົນ ມີຄວາມຜິດພາດໜັກເຂົ້າຊຸກໄຊ້ ຈົນວ່າເຮັດເສຍຫາຍວຽກການນັ້ນ ກໍບໍ່ຕ່າງຫຍັງກັບວ່າເຫັນເພື່ອນສະຫາຍເຈັບປ່ວຍແລ້ວບໍ່ຊ່ວຍປິ່ນປົວເອົາກັນ. ການຈົ່ງຈຽມຕົນເອງບໍ່ກ້າຕຳໜິຕົນເອງປ່ອຍໃຫ້ຂໍ້ບົກພ່ອງຂອງຕົນໜັກເຂົ້າເລື້ອຍໆນັ້ນ ກໍບໍ່ຕ່າງຫຍັງກັບຕົນເອງເອົາຢາເບື່ອມາໃຫ້ຕົນເອງກິນ, ທ້າຍສຸດ ຕົນເອງກໍເປັນຜູ້ເມົາ ແລະ ຜູ້ຕາຍ.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດ

# ປະໂຫຍດ ແລະ ໂທດຂອງການກິນ

**ໂດຍ: ສາວແອ່ນ**



ອັນຕະລາຍຈາກການກິນສົ້ມ ເມື່ອປຽບທຽບໃສ່ອັນຕະລາຍຈາກການກິນຂອງຫວານ ແລະ ອັນຕະລາຍຈາກການກິນເຄັມ ຖືວ່າບໍ່ຮ້າຍແຮງຫຼາຍປານໃດ ແຕ່ຖ້າກິນສົ້ມຫຼາຍເກີນໄປກໍບໍ່ດີຕໍ່ຮ່າງກາຍເຊັ່ນດຽວກັນ ຄວາມສົ້ມ ມີສອງປະເພດ ຄື: ຄວາມສົ້ມຈາກການສັງເຄາະ ແລະ ຄວາມສົ້ມຈາກຜັກ ແລະ ໝາກໄມ້.

- ຄວາມສົ້ມຈາກການສັງເຄາະ: ໃນນ້ຳສົ້ມສາຍຊູ ມີສ່ວນປະກອບສຳຄັນແມ່ນ Glacial Acetic Acid ເຊິ່ງເປັນສານທີ່ກໍ່ໃຫ້ເກີດຄວາມສົ້ມ ຫຼື ເອີ້ນວ່າ ກົດຊິຕິກ ໃຫ້ຄວາມສົ້ມແທນໝາກນາວ ຖ້າກິນໃນປະລິມານເລັກນ້ອຍ ກໍບໍ່ເປັນຫຍັງ ແຕ່ຖ້າກິນປະລິມານຫຼາຍ ຈະພົບວ່າມີຜົນອັນຕະລາຍຕໍ່ຮ່າງກາຍ

- ຄວາມສົ້ມຈາກຜັກ ແລະ ໝາກໄມ້ ແມ່ນຄວາມສົ້ມຈາກໝາກໄມ້ຕ່າງໆເຊັ່ນ: ໝາກນາວ, ໝາກມ່ວງ, ໝາກຂາມ, ໝາກຍົມ, ໝາກນັດ... ຈະບໍ່ເປັນອັນຕະລາຍຫຼາຍ.

+ ຜົນປະໂຫຍດຂອງການກິນສົ້ມ

- ແກ້ໄອ-ເຈັບຄໍ ໂດຍໃຊ້ໝາກນາວ 3 ໜ່ວຍປະສົມກັບນ້ຳເຜີ້ງ 1 ບ່ວງ ຈະຊ່ວຍແກ້ອາການໄອ ແລະ ເຈັບຄໍໄດ້ດີ ເພາະສາມາດຊ່ວຍບັນເທົາອາການໄອແລະນ້ຳເຜີ້ງບັນເທົາອາການເຈັບຄໍໄດ້.

- ປ້ອງກັນການເປັນຫວັດ ໝາກນາວອຸດົມໄປດ້ວຍວິຕາມິນຊີ ແລະ ຖ້າກິນເປັນປະຈຳ ຈະຊ່ວຍບັນເທົາ ຫຼື ປ້ອງກັນການເປັນຫວັດໄດ້.

- ກະຕຸ້ນການຍ່ອຍອາຫານ

- ຊ່ວຍບັນເທົາອາການຫິວນ້ຳ

+ ອັນຕະລາຍຂອງການກິນສົ້ມ

- ທຳລາຍແຂ້ວ ເພາະກົດທີ່ມີໃນອາຫານສົ້ມ ຈະໄປທຳຮ້າຍແຂ້ວເທື່ອລະໜ້ອຍ ເຮັດໃຫ້ແຂ້ວຫ້ຽນທັງແຂ້ວເທິງ ແລະ ແຂ້ວລຸ່ມ ເຮັດໃຫ້ເກີດອາການເຂັດແຂ້ວ ແລະ ເຮັດໃຫ້ການອັດແຂ້ວມີຄວາມຫຍຸ້ງຍາກ ເພາະມີຄ່າເວລາ ແລະ ຄ່າໃຊ້ຈ່າຍຫຼາຍ.

- ຖອກທ້ອງ: ການກິນອາຫານທີ່ມີຣົດຊາດສົ້ມຫຼາຍ ມັກຈະເຮັດໃຫ້ຖອກທ້ອງ, ຮ້ອນໃນ ແລະ ລະບົບນ້ຳເຫຼືອງໃນຮ່າງກາຍມີບັນຫາ ຈຶ່ງເຮັດບາດແຜນານຫາຍດີ.

+ ກະດູກຜ່ອຍ: ຄວາມສົ້ມທີ່ໄດ້ຈາກນ້ຳສົ້ມສາຍຊູ ເຖິງວ່າມັນຈະຊ່ວຍກຳຈັດກິ່ນຄາວປາ ແລະ ຫລຸດເຊື້ອແບັກທີເລຍໃນອາຫານ ແຕ່ຖ້າທ່ານກິນຫຼາຍເກີນໄປຈະເປັນອັນຕະລາຍຕໍ່ກະດູກໄດ້.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

# ໝອກຫູ

**ໂດຍ: ໂອທອງ ຄຳອິນຊູ**

✳ ນິທານທຳວ່າໄວ້
ພາມມະນາມີເມຍ
ອະມິດຕະຕານາງຫຼ້າ
ໃຫ້ຜົວ ໄປຊອກຂ້ອຍ
ໃນຊາດຊາດົກ
ວ່າເປັນສາວນ້ອຍ
ໄຂຄຳເບີຍບອກ
ມາໃຊ້ຊ່ວຍຕົນ

✳ ພາມມະນາແກ່ເຖົ້າ
ແລ້ວເລົ່າ ໄປພານພົບ
ຈຶ່ງຂໍເອົາສອງນ້ອຍ
ທັງກັນຫາພໍ່າພ້ອມ
ເລີຍອອກເດີນດົງ
ພະເຫວດເນົາໃນດ້າວ
ຕາມຄຳເມຍສັ່ງ
ຊາລີນ້ອຍລູກມະທີ

✳ ບ່ອນທີ່ ຮຽມຢາກເວົ້າ
ປູ່ຍ່າ ມາຫວງຖາມ
ແລ້ວຈັດອາຫານລ້ຽງ
ພາມຈຶ່ງ ຍູທ່າງຫຍໍ້າ
ຕອນຜ່ານກາຍນະຄອນ
ໄຖ່ເອົາຫຼານຫຼ້າ
ຕາພາມຫຼາຍເບື່ອງ
ກິນເລື້ອຍລື່ນເລີງ

✳ ທ້ອງພາມ ເລີຍແຕກຕູ້ມ
ພາມບໍ່ຍັງເປັນຄົນ
ອັນນີ້ ຮຽມຂຽນຂຶ້ນ
ບໍ່ໄດ້ ຫາຮ່າວເວົ້າ
ປານລະເບີດບົມບີ
ມິ່ງມໍລະນາຈ້ອຍ
ຕາມຄູບາເທດ
ລົມຫຼົ້ນມ່ວນເພີນ

✳ ໃນສະໄໝໃໝ່ນີ້
ຂ່າວວ່າ ມີລາງຄົນ
ແຕ່ບໍ່ ຂໍໄຂເວົ້າ
ຍັງຢືນຢັນບໍ່ໄດ້
ມີຂ່າວໜາຫູ
ໂລບໂກງກິນກ້ຽງ
ໃຜກິນຫຍັງແດ່
ຮຽມຢ້ານຂ່າວປອມ

✳ ຖັນແມ່ນຖືຂ່າວຂໍ້
ມີຜູ້ ໂກງກິນຫຼາຍ
ສັງບໍ່ ຍິນສຽງທ້ອງ
ສັງຮ່າວ ມາຊ່າລ້າ
ຈາໂຈດໂຈເຈ
ດັ່ງຕາພາມເຖົ້າ
ຂອງຄົນໃດແຕກ
ພາໃຫ້ໝອກຫູ ເດີ.






## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✳ ***ກອງ***ປະຊຸມສະໄໝສາມັນ***ເທື່ອທີ 6*** ຂອງສະພາແຫ່ງຊາດ ***ຊຸດທີ IX*** ໄຂຂຶ້ນຢ່າງເປັນທາງການ ໃນວັນທີ ***31 ຕຸລາ*** ແລ້ວຈະສືບຕໍ່ຍາວໄປຫາ ***21 ພະຈິກ*** 2023 ລວມ ***16 ວັນ*** ທີ່ບັນດາທ່ານ ສສຊ ຜູ້ທ້າວທັນຈະບົບຄົ້ນເຈາະຈົ້ມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ພໍ່ແມ່ປະຊາຊົນລາວບັນດາເຜົ່າ ***ຢ່າງເອົາຈິງເອົາຈັງ*** ທີ່ຫ້ອງປະຊຸມ ສະພາແຫ່ງຊາດ ຈາກນີ້ໄປ ບັນຍາກາດຄົງຄຶກຄື້ນ ສສຊ ກ່າວມີຄ່າເທົ່າ ***ຫຼາຍປະເດັນຊິບໍ່ມາ*** ວ່າກັນໃຫ້ມັນແຈ້ງ ຕິດຕາມຟັງຄະແຫຼງເອົ້າ ***ຕົວແທນເຮົາຊິໄຂກ່າວ*** ບັນຫາໃດເຄືອງຂຸ່ນຂ້ອງ ອາໃຫຼເອົ້າສົ່ງໄປ ***ທ່ານເອີຍ!*** (ສາຍດ່ວນ ສະພາ ***156*** ແລະ ອີເມວ Nalao.56@gmail.com; App: lao na) ***ໂມງລັດຖະການ.***

✳ ***ວັນ***ອອກພັນສາປະວ່ລະບາຜ່ານພົ້ນ ຫຼາຍຄົນກໍກະກຽມຈິດກຽມໃຈ ທັງກຽມເງິນໄວ້ໃສ່ຊອງຕາມລະດູການ ທັງກຽມງານບາສີ ***ແຕ່ງແປງເອົາໄພ້*** ກຽມໃຈ***ເອົາເສີຍພ້ອມ*** ຈັດງານດອງພິທີແຕ່ງ ສາມສີ່ບັດອົ່ງລົ້ນ ອອມເງິນໄວ້ໃສ່ແຕ່ຊອງ ***ພີ່ນ້ອງເອີຍ!***

## ຊອບຍົ້ມ

**# ແອ່ບຕຸ້ງ**

### ລ່າອົ້ງບໍ່ມາດຕະຖານ

ອ້າຍແກ້ວ ພ້ອບລ່າອົ້ງກັບສາວງາມຄົນໜຶ່ງຢູ່ໃນເທັກ, ພ້ອບບໍ່ຮອດນາທີ ເພງກໍ່ຢຸດ, ອ້າຍແກ້ວໃຈຮ້າຍ ແລະ ງົງ ເລີຍເອົ້າກັບສາວຄົນນັ້ນວ່າ:

**ອ້າຍແກ້ວ:** ເປັນຫຍັງເວລາອ້າຍພ້ອບກັບນ້ອງເທື່ອໃດ ເພງຄືມາສົ້ນຜິດປົກກະຕິແທ້?

**ຜູ້ສາວ:** ເພາະວ່ານັກຮ້ອງເປັນແຟນນ້ອງ

**ອ້າຍແກ້ວ:** ???



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຍາມເມື່ອຊີວິດຍັງ
ຢ່າຍອມລົບຕາແລ
ສອງແຂນສອງຂາພ້ອມ
ແມ່ນເສັ້ນທາງຄົດໂຄ້ງ

ຍັງຢູ່ເປັນຄົນ
ບົ່ງດູດາຍລ້າ
ຄະໜອມຄຶງເຄື່ອນຍ່າງ
ຍາວເຍັ້ນກໍເດີນດັ້ນດຸ່ງໄປ

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON





## ລໍາພຶງ - ລໍາພັນ

"ລໍາພຶງ" ແລະ "ລໍາພັນ" ເປັນສອງຄໍາທີ່ມີສຽງ ແລະ ຄວາມໝາຍໃກ້ກັນດັ່ງນີ້:

"ລໍາພຶງ" ເປັນຄໍາກິລິຍາ ມາຈາກເຄົ້າຂະແມ **រំពឹង** (ຣ້ອມພຶງ) ໝາຍເຖິງ "ຄຶດຄໍານຶງຢູ່ໃນໃຈ, ຄຶດຮອດ" ເຊັ່ນ

- ລາວລໍາພຶງເຖິງຄວາມຫຼັງດ້ວຍຄວາມເສົ້າໃຈ.
- ຍິງສາວລໍາພຶງຫາຄົນຮັກດ້ວຍຄວາມເຫງົາໃຈ.

"ລໍາພຶງ" ທີ່ມາຈາກເຄົ້າພາສາຂະແມ ລາງເທື່ອເພິ່ນກໍແປງສຽງເປັນສຽງລາວອີກແບບໜຶ່ງວ່າ "ຣໍ່າເພິງ ເຊິ່ງກໍໝາຍເຖິງ "ຄຶດຮອດຄຶດເຖິງ" ເຊັ່ນກັນ ດັ່ງໃນມະຫາກາບ ທ້າວຮຸ່ງທ້າວເຈືອງ" ມີວັກໜຶ່ງໄດ້ກ່າວໄວ້ວ່າ "ເຂົາຫາກລືມຄວາມທຸກບໍ່ຣໍ່າເພິງເຖິງບ້ານ".

"ລໍາພັນ" ເປັນຄໍາກິລິຍາ ໝາຍເຖິງ "ຈົ່ມພຶມພໍາດ້ວຍຄວາມເສົ້າໂສກ" ເຊັ່ນ

- ແມ່ຕູ້ລໍາພັນເຖິງຄວາມທຸກໃນສະໄໝຄາວຍັງເປັນສາວ.
- ຄໍາດີມັກຟັງເພງ "ໄຕດໍາລໍາພັນ", ຫົວໃຈລໍາພັນ, ຈໍາຕີລໍາພັນ"
- ສີແຫຼ້ຮ້ອງຮໍ່າລໍາພັນຫາຄົນຮັກທີ່ຈາກໄປໄກ ບໍ່ຮູ້ວ່າເມື່ອໃດຈະໄດ້ຈອບພົບກັນອີກ.

# ຂໍ້ສັງເກດ: "ລໍາພຶງ" ແລະ "ລໍາພັນ" ລາງເທື່ອກໍໃຊ້ຊ້ອນກັນເປັນ "ລໍາພຶງລໍາພັນ" ເຊັ່ນ "ດວງເຮົງລໍາພຶງລໍາພັນຫາຄົນຮັກປານໃຈຊິຂາດ". ທັງ "ລໍາພຶງ" ຫຼື "ຣໍ່າເພິງ" ແລະ "ລໍາພັນ" ມັກໃຊ້ໃນທາງວັນນະຄະດີ ເຊິ່ງເປັນສໍານວນການປະພັນທັງໃນບົດກອນ ບົດເພງ ເລື່ອງສັ້ນ ແລະ ນະວະນິຍາຍ




## ອອກແບບລະບົບໃຊ້ພະລັງງານແສງຕາເວັນຜະລິດເຊື້ອໄຟໄຮໂດຣເຈນສະອາດ



ເມື່ອບໍ່ດົນມານີ້ ໄດ້ມີການລາຍງານວ່າ: ທີມງານນັກວິໄຈຂອງສະຖາບັນເຕັກໂນໂລຊີ ແມສຊາຊູເຊດ (MIT) ໃນລັດແມສຊາຊູເຊດຂອງສະຫະລັດອາເມຣິກາ ໄດ້ເປີດເຜີຍຜົນງານການອອກແບບໃໝ່ທີ່ອາດຈະຄວບຄຸມ ແລະ ໃຊ້ປະໂຫຍດຈາກຄວາມຮ້ອນຂອງດວງຕາເວັນສູງເຖິງ 40% ເພື່ອຜະລິດເຊື້ອໄຟໄຮໂດຣເຈນສະອາດ.

ຜົນການສຶກສາທີ່ເຜີຍແຜ່ຜ່ານວາລະສານໂຊລາ ເອັນເນີຈີ (Solar Energy Journal) ລະບຸວ່າ ທີມວິສາວະກອນຂອງ MIT ໄດ້ເຮັດການອອກແບບລະບົບທີ່ສາມາດຜະລິດໄຮໂດຣເຈນທາງອຸນຫະພູມທາງເຄມີ ຫຼື ເຄມີຄວາມຮ້ອນ (Thermochemical) ຈາກພະລັງງານແສງຕາເວັນ. ລະບົບດັ່ງກ່າວຄວບຄຸມ ແລະ ໃຊ້ປະໂຫຍດຈາກຄວາມຮ້ອນຂອງດວງຕາເວັນ ເພື່ອແຍກນໍ້າໂດຍກົງ ແລະ ຜະລິດໄຮໂດຣເຈນ ເຊິ່ງເປັນເຊື້ອໄຟສະອາດທີ່ສາມາດເປັນພະລັງງານຂັບເຄື່ອນລົດບັນທຸກ, ເຮືອ ແລະ ເຮືອບິນໃນໄລຍະໄກ ໂດຍບໍ່ມີການປ່ອຍແກັສເຮືອນແກ້ວ. ພ້ອມນັ້ນ, ລະບົບຜະລິດໄຮໂດຣເຈນແບບດັ້ງເດີມແມ່ນອາໄສເຊື້ອໄຟຟອສຊິວ ແຕ່ລະບົບໃໝ່ໃຊ້ພຽງພະລັງງານແສງຕາເວັນເທົ່ານັ້ນ.

ທ່ານ ອາເມດ ໂກເນີມ ອາຈານປະຈໍາສາຂາວິຊາວິສະວະກໍາເຄື່ອງກົນຈັກຂອງ MIT ເຊິ່ງເປັນຜູ້ຂຽນຜົນການສຶກສາອັນດັບທໍາອິດເປີດເຜີຍວ່າ ໄຮໂດຣເຈນຖືວ່າເປັນເຊື້ອໄຟແຫ່ງອະນາຄົດ ໂດຍມີຄວາມຈໍາເປັນຕ້ອງຜະລິດໄຮໂດຣເຈນໃຫ້ໄດ້ໃນຕົ້ນທຶນທີ່ຖືກ ແລະ ໄດ້ປະລິມານຫຼາຍ.

## ກໍາປູເຈຍ ໄດ້ຮັບລາງວັນຈຸດໝາຍປາຍທາງການທ່ອງທ່ຽວລະດັບໂລກ

ອີງຕາມການລາຍງານເມື່ອບໍ່ດົນນີ້ ໃຫ້ຮູ້ວ່າ: ກະຊວງການທ່ອງທ່ຽວຂອງກໍາປູເຈຍໄດ້ເປີດເຜີຍບົດລາຍງານໂດຍລະບຸວ່າ ກໍາປູເຈຍໄດ້ຮັບລາງວັນກຽດຕິຍົດຈາກ World Travel Award 2023 ຈໍານວນ 2 ລາງວັນ ໄດ້ແກ່ ຈຸດໝາຍປາຍທາງ ທາງວັດທະນະທໍາຂັ້ນນໍາຂອງອາຊີ ແລະ ຈຸດໝາຍປາຍທາງການເດີນທາງຂອງຄົນໜຸ່ມສາວຂັ້ນນໍາຂອງອາຊີ.



ທ່ານ ທົບ ໂສພຽກ ໂຄສົກ ແລະ ລັດຖະມົນຕີກະຊວງການທ່ອງທ່ຽວຂອງກໍາປູເຈຍ ກ່າວວ່າ: ກໍາປູເຈຍຖືວ່າເປັນຈຸດໝາຍປາຍທາງ ທາງວັດທະນະທໍາ ແລະ ນິເວດວິທະຍາໂດຍກໍາປູເຈຍມີຊື່ສຽງຄື: ອັງກໍວັດເປັນແຫຼ່ງມໍລະດົກໂລກໃນແຂວງສຽມລາດ ແລະ ອ່າວທະເລທີ່ສວຍງາມໃນແຂວງສີຫະນຸວິນ. ພ້ອມນັ້ນ, ການທ່ອງທ່ຽວຖືວ່າເປັນໜຶ່ງໃນສີ່ເສົາຫຼັກຄໍ້າຈູນເສດຖະກິດກໍາປູເຈຍ ໂດຍອີງຕາມຂໍ້ມູນຈາກກະຊວງການທ່ອງທ່ຽວຂອງກໍາປູເຈຍ ລະບຸວ່າ: ກໍາປູເຈຍຕ້ອນຮັບນັກທ່ອງທ່ຽວຕ່າງຊາດ ປະມານ 3,5 ລ້ານຄົນ ໃນໄລຍະເດືອນມັງກອນ ເຖິງເດືອນສິງຫາຂອງປີນີ້ ເຊິ່ງເພີ່ມຂຶ້ນ 250,8% ເມື່ອທຽບແບບລາຍປີ.

## ສິງກະໂປ ອະນຸຍາດໃຫ້ນໍາເຂົ້າໄຟຟ້າກາກບອນຕໍ່າ ຈາກຫວຽດນາມ

ອີງຕາມການລາຍງານຂ່າວ ເມື່ອວັນທີ 26 ຕຸລາຜ່ານມາ ໃຫ້ຮູ້ວ່າ: ສິງກະໂປ ຈະນໍາເຂົ້າໄຟຟ້າ ກາກບອນຕໍ່າ 1,2 GW ເຊິ່ງຕົ້ນຕໍແມ່ນພະລັງງານແຮງລົມ ຈາກຫວຽດນາມ, ມຸ່ງໄປເຖິງການປະຕິບັດເປົ້າໝາຍນໍາເຂົ້າພະລັງງານທົດແທນ 4 GW ໃນປີ 2035, ກວມເອົາເຖິງ 30% ພະລັງງານນໍາໃຊ້ທັງໝົດຂອງປະເທດ.



ທ່ານ ທານ ສີ ເລັງ ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ສິງກະໂປ ໄດ້ມີຄໍາເຫັນໃນງານສັບປະດາພະລັງງານສາກົນ ເຊິ່ງເປີດຂຶ້ນໃນວັນທີ 24 ຕຸລາຜ່ານ ທີ່ປະເທດສິງກະໂປ ທ່ານຢັ້ງຢືນວ່າ: ພະລັງງານສະອາດ ແມ່ນໜຶ່ງໃນບັນດາເຄື່ອງມືສໍາຄັນທີ່ສຸດຂອງສິງກະໂປ ແນໃສ່ຕ້ານຄືນໄພນາບຂູ່ຈາກການປ່ຽນແປງຂອງດິນຟ້າອາກາດໃນປັດຈຸບັນ.

ອີງການຕະຫຼາດພະລັງງານ (EMA) ສິງກະໂປ ໄດ້ອອກໜັງສືອະນຸຍາດໃຫ້ບໍລິສັດພະລັງງານ Sembcorb Utilities ນໍາເຂົ້າພະລັງງານໄຟຟ້າຈາກຫວຽດນາມ.

ເຫັນໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ບົດຮຽນການແກ້ໄຂບັນຫາສາສະໜາ ແລະ ບັນຫາຕຳແໜ່ງງານ

ພົບກັນໃນ "ຜູ້ແທນປະຊາຊົນ" ສະບັບນີ້ ມີເລື່ອງເລົ່າຈາກ ມຽນມາ ກ່ຽວກັບພະສົງແຕກປອກຊອກ ສ້າງບັນຫາໃຫ້ຄົນໃນສັງຄົມກຽດຊັງກັນ ຈົນທາງການຕ້ອງໄດ້ໃຊ້ມາດຕະການອັນຈຳເປັນ ເພື່ອລະງັບ ເຫດການດັ່ງກ່າວ ແລະ ສຸດທ້າຍ ແມ່ນກ່ຽວບົດຮຽນ ຫວຽດນາມ ກ່ຽວກັບການກຳນົດຕຳແໜ່ງງານຂອງພະນັກງານລັດ.

ທີ່ **ມຽນມາ** ເຄີຍໄດ້ຍິນຄຳກ່າວຂານກັນມາແຕ່ເຫິງແລ້ວວ່າ ມຽນມາເປັນປະເທດຊາວພຸດທີ່ເຄັ່ງຄັດທີ່ສຸດໃນໂລກ ພິສູດໄດ້ຈາກຫຼັກການປະພຶດ ແລະ ລະບຽບການຕ່າງໆທີ່ພົວພັນກັບວັດວາອາຮາມ, ການປະຕິບັດຕົນຂອງພະສົງ, ສຳມະເນນ ແລະ ຄາລະວາດ. ໃນຊຸມປີຫຼັງໆມານີ້, ມີຂ່າວອ່າວຖີ່ຈາກມຽນມາ ກ່ຽວກັບການລົງໂທດນັກທ່ອງທ່ຽວ-ນັກທຸລະກິດຕ່າງປະເທດ ທີ່ມີການກະທຳອັນເປັນການລົບລູ່ໝິ່ນປະໝາດສາສະໜາພຸດ ເຊັ່ນ ການລົບກວນເວລາພະສົງສູດ-ເທດ, ການຈັບບາຍແຕະຕ້ອງພະພຸດທະຮູບແບບຂາດຄວາມເຄົາລົບ, ການນຸ່ງຖືບໍ່ເໝາະສົມຕາມສະຖານທີ່ສັກກະລາບູຊາຕ່າງໆ, ການນຳໃຊ້ຮູບພາບທາງສາສະໜາເພື່ອຜົນປະໂຫຍດທາງການຄ້າ ແລະ ອື່ນໆ ແນວໃດກໍດີ, ທາງການມຽນມາກໍມີກົດເຫຼັກ ເພື່ອປົກປ້ອງສາສະໜາອື່ນໆບໍ່ໃຫ້ຖືກຈຳແນກຈາກຜູ້ເຊື່ອຖືສາສະໜາພຸດທີ່ມີຈຳນວນຫຼວງຫຼາຍ. ຕົວຢ່າງເມື່ອປະມານ 7 ປີຜ່ານມາ, ຢູ່ມຽນມາ ໄດ້ເກີດມີກະແສຕ້ານກຸ່ມຄົນທີ່ນັບຖືສາສະໜາອິດສະລາມ ໂດຍສະເພາະແມ່ນຊາວໂຣຫິງຢາ ຢູ່ລັດຍະໄຂ່. ຂ່າວບອກວ່າ ຜູ້ທີ່ອອກໜ້າພາທາງຂະບວນການຕ້ານຊາວມຸດສະລິມນັ້ນ ໄດ້ແກ່ພະສົງໃນສາສະໜາພຸດທີ່ມີຊື່ສຽງອົງໜຶ່ງຊື່ວ່າ ພະອາຈານ ວິຣະທຸ (Wirathu). ພະອາຈານ ວິຣະທຸນີ້ເປັນພະສົງທີ່ມີຫົວຮຸນແຮງສຸດຂີດ ໃນການຕ້ານຊຸມຊົນທີ່ນັບຖືສາສະໜາອິດສະລາມ ຈົນເພິ່ນຖືກຂະໜານນາມວ່າເປັນ "ໃບໜ້າຜູ້ກໍ່ການຮ້າຍໃນສາສະໜາພຸດ". ພະອົງນີ້ ໄດ້ສວຍໃຊ້ບົດສູດ-ບົດເທດ ເຈືອປົນສານພິດໃຫ້ຄົນໃນສັງຄົມມີຄວາມກຽດຊັງ ແລະ ຈຳແນກຊາວມຸດສະລິມ, ໃຫ້ທຸກຄົນເຫັນວ່າ ສາສະໜາອິດສະລາມ ແລະ ຊາວມຸດສະລິມ ເປັນໄພອັນຕະລາຍຕໍ່ສັງຄົມຊາວພຸດ, ເພິ່ນໄດ້ອອກໜ້ານຳພາຂະບວນການປະທ້ວງຊາວມຸດສະລິມ ແລະ ເປັນເຈົ້າການຮຽກຮ້ອງໃຫ້ລັດຖະບານມຽນມາຈຳກັດການເກີດຂອງເດັກໃນສັງຄົມຊາວມຸດສະລິມ ໂດຍມີເປົ້າໝາຍລຶບລ້າງເຜົ່າພັນທີ່ນັບຖືສາສະໜາອິດສະລາມໃຫ້ສິ້ນຊາກໄປໃນທີ່ສຸດ. ໃນເດືອນກຸມພາ 2016, ທ່ານ ໂກນີ, ນັກກົດໝາຍລືຊື່ຂອງຊາວມຸດສະລິມ ຖືກລອບສັງຫານຊຶ່ງທາງການມຽນມາ ເຊື່ອວ່າເປັນການກະທຳຂອງພວກແບ່ງແຍກສາສະໜານັ້ນເອງ. ຂ່າວເລື່ອງນີ້ໄດ້ປິດທ້າຍວ່າ ພະອາຈານໃຫຍ່ ມະຫານາຍາກາ ເຊິ່ງເປັນປະທານ ອົງການສາສະໜາພຸດມຽນມາ ໄດ້ອອກຄຳສັ່ງຫ້າມ ພະອາຈານ ວິຣະທຸສູດ ແລະ ເທດ ເປັນເວລາ 1 ປີເຕັມໆ. ນີ້ເປັນການລົງໂທດເບື້ອງຕົ້ນຕໍ່ພະສົງຫົວຮຸນແຮງອົງນີ້. ວ່າກັນວ່າ ນັບແຕ່ເວລານັ້ນເປັນຕົ້ນມາ ວາທະທີ່ກໍ່ໃຫ້ເກີດຄວາມກຽດຊັງ, ການແບ່ງແຍກ ແລະ ຈຳແນກສາສະໜາອິດສະລາມ ກໍມອດມິດລົງ.

ທີ່ **ຫວຽດນາມ** ໃນຊຸມປີຫຼັງໆມານີ້ ມີຂ່າວວ່າ ທາງການຫວຽດນາມໄດ້ດຳເນີນການປັບປຸງຕຳແໜ່ງງານ ແລະ ກວດກາຄືນຕຳແໜ່ງບໍລິຫານ ພາຍຫຼັງໄດ້ມີການທົບທວນ ແລະ ເຫັນວ່າອັດຕາເງິນເດືອນ ແລະ ເງິນອຸດໜູນທີ່ເຄີຍປະຕິບັດມານັ້ນຍັງບໍ່ສົມເຫດສົມຜົນ. ກ່ອນມີການປັບປຸງ, ການກຳນົດຊັ້ນ ແລະ ຂັ້ນເງິນເດືອນຢູ່ ຫວຽດນາມນັ້ນ ແມ່ນປະຕິບັດຕາມອາຍຸການ, ຊັ້ນ, ຂັ້ນ ແລະ ໜ້າທີ່ວິຊາສະເພາະຂອງພະນັກງານ. ວິທີດັ່ງກ່າວ ເຫັນວ່າເຮັດໃຫ້ມີການສິ້ນເປືອງກ່ຽວກັບເງິນອຸດໜູນຕຳແໜ່ງທີ່ຍັງສູງຫຼາຍ ເພາະວ່າຂະແໜງການໃດກໍຮຽກຮ້ອງໃຫ້ມີການປະຕິບັດເງິນອຸດໜູນ, ສຸດທ້າຍກໍເລີຍເຮັດໃຫ້ເງິນອຸດໜູນສູງກວ່າລະດັບເງິນເດືອນພື້ນຖານ. ເພື່ອແກ້ໄຂບັນຫານີ້ ຈຶ່ງຈຳເປັນຕ້ອງໄດ້ກຳນົດຕຳແໜ່ງງານຄືນໃໝ່ໃຫ້ເປັນລະບົບເອກະພາບດ້ານບົດບາດ ແລະ ຄວາມຮັບຜິດຊອບຂອງພະນັກງານແຕ່ລະຄົນ, ການກຳນົດຕຳແໜ່ງງານຕ້ອງຕິດພັນກັບຄວາມສາມາດຂອງພະນັກງານ, ພ້ອມດຽວກັນ ກໍຫຼຸດຈຳນວນຕຳແໜ່ງງານທີ່ບໍ່ຈຳເປັນ ຕົວຢ່າງ ໜ່ວຍງານໃດທີ່ມີພະນັກງານແຕ່ 20 ຄົນລົງມາ ແມ່ນບໍ່ໃຫ້ມີຜູ້ຮອງຫົວໜ້າກາຍ 2 ຄົນ, ຖ້າມີພະນັກງານກາຍ 20 ຄົນຂຶ້ນໄປ ໃຫ້ມີຮອງຫົວໜ້າບໍ່ກາຍ 3 ຄົນ (ຍົກເວັ້ນໜ່ວຍງານທີ່ກຸ້ມຕົນເອງ).




## ເວລາສໍາລັບຕັດຜົມ

#ບ່າວກະບື

"ທ່ານ... ຂ້ານ້ອຍຂໍເວລາໄປຕັດຜົມແດ່ລັກໜຶ່ງຊົ່ວໂມງ"

"ແນ່ນອນໃຫ້ບໍ່ໄດ້, ຈົ່ງໃຊ້ເວລາສ່ວນຕົວໄປຕັດ"

"ແຕ່ຜົມຂ້ານ້ອຍປົ່ງໃນເວລາໂມງການໃດ໋ທ່ານ"

"ມັນບໍ່ໄດ້ປົ່ງໃນເວລາໂມງການໝົດທຸກເສັ້ນດອກ, ບັກນ້ອຍ"

"ຂ້ານ້ອຍກໍບໍ່ໄດ້ວ່າຊິຕັດອອກໝົດທຸກເສັ້ນດອກນ່າ"

## TIME FOR HAIRCUT

#BAOKBU

"May I have an hour off to get my haircut sir?"

"Certainly not, have it cut on your own time"

"But it grows in office hours, sir"

"It doesn't do all its growing during office hours, boy"

"I'm not cutting it all off !"

ອ່ານມ່ວນ ຊວນ ຍິ້ມ



ງານບຸນງານດອງ ຫຼື ງານຍາດຕ່ອນ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

ຜູ້ຊີ້ນຳ : ທ່ານ ສົງຄຳ ວົງພະຈັນ
ຄະນະຊ່ຽວຊານທີ່ປຶກສາ : ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ
ຄະນະບັນນາທິການ : ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ
ກອງບັນນາທິການ : ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ
ອອກແບບ - ຈັດໜ້າ : ນາງ ນິດຕາ ຄູນປາກດີ